ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-15 ກຸມພາ 2024
ປີທີ 13
ສະບັບທີ 957
ລາຍສັປະດາ

## ວາງສະແດງຮູບພາບ, ເອກະສານ, ປຶ້ມ ແລະ ວັດຖຸພັນ ຂອງປະທານ ຄຳໄຕ ສີພັນດອນ



(ສພຊ) ຕອນເຊົ້າຂອງວັນທີ 7 ກຸມພາ 2024 ທີ່ຫໍພິພິທະພັນ ໄກສອນ ພົມວິຫານ ໄດ້ມີພິທີເປີດງານວາງສະແດງຮູບພາບ, ເອກະສານ, ປຶ້ມ ແລະ ວັດຖຸພັນ ພາຍໃຕ້ຫົວຂໍ້: "ຊີວິດ ແລະ ການເຄື່ອນໄຫວປະຕິວັດຂອງປະທານ ຄຳໄຕ ສີພັນດອນ" ເນື່ອງໃນໂອກາດສະເຫຼີມສະຫຼອງວັນເກີດຂອງເພິ່ນຄົບຮອບ 100 ປີ (08/02/1924-08/

ອ່ານຕໍ່ໜ້າ 4




## ກອງປະຊຸມຄະນະປະຈຳ ສະພາແຫ່ງຊາດ ເດືອນມັງກອນ

(ສພຊ) ເພື່ອພິຈາລະນາ ແລະ ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ໃນລະຫວ່າງວັນທີ 01-02 ກຸມພາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນມັງກອນ 2024 ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ



ເລຂາທິການສູນກາງພັກ, ຜູ້ຮັກສາການແທນປະທານຄະນະປະຈຳສະພາແຫ່ງຊາດ; ເຂົ້າຮ່ວມກອງປະຊຸມຍັງມີບັນດາທ່ານ

ອ່ານຕໍ່ໜ້າ 3

## ສົ່ງເສີມລັດຖະສະພາ ທີ່ເອົາໃຈໃສ່ບົດບາດຍິງ-ຊາຍ

(ສພຊ) ກອງປະຊຸມສຳມະນາຂອງສະມາຊິກລັດຖະສະພາເພດຍິງລະຫວ່າງຊາດອາຊຽນ ຫຼື ໄວປາ (WAIPA) ຄັ້ງທີ 2 ໄດ້ຈັດຂຶ້ນໃນລະຫວ່າງວັນທີ5-6 ກຸມພາ 2024 ທີ່ສະພາແຫ່ງຊາດ, ສປປລາວ ພາຍໃຕ້ຫົວຂໍ້: "ສົ່ງເສີມລັດຖະສະພາທີ່ເອົາໃຈໃສ່ບົດບາດຍິງ-ຊາຍເພື່ອປະຊາຄົມອາຊຽນທີ່ເຂັ້ມແຂງ, ເຊື່ອມຈອດ ແລະ ກວມລວມ". ເຂົ້າຮ່ວມກອງປະຊຸມມີທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ທັງເປັນປະທານໄວປາ; ບັນດາທ່ານຮອງປະທານກຳມາທິການ, ເລຂາທິການໃຫຍ່ໄອປາ, ສະມາຊິກລັດຖະສະພາຈາກບັນດາປະເທດສະ ມາຊິກໄອປາ (AIPA) 7 ປະເທດຄື: ບຣູໄນ, ກຳປູເຈຍ, ອິນໂດເນເຊຍ, ມາເລເຊຍ, ຟີລິບປິນ, ໄທ ແລະ ຫວຽດນາມ; ນອກນັ້ນ, ຍັງມີປະເທດສັງເກດການ, ຜູ້ຕາງໜ້າສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນ.

ອ່ານຕໍ່ໜ້າ 8



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ນະຄອນຫຼວງວຽງຈັນ, ວັນທີ 7 ກຸມພາ 2024

ພະນະທ່ານ ວູາດີເມຽ ອັງເຫຼເຊັນໂກ,
ປະທານສະພາຜູ້ແທນປະຊາຊົນ ແຫ່ງ ສາທາລະນະລັດ ເບລາຣຸດຊີ
ນະຄອນຫຼວງມິນສ໌.

ໃນນາມສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍ່ຄື ປະຊາຊົນລາວບັນດາເຜົ່າ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍສົ່ງຄຳຊົມເຊີຍອັນອົບອຸ່ນ ແລະ ພອນໄຊອັນປະເສີດ ມາຍັງພະນະທ່ານ, ສະພາຜູ້ແທນປະຊາຊົນ, ລັດຖະບານ ແລະ ປະຊາຊົນ ເບລາຣຸດຊີ ທຸກຖ້ວນໜ້າ ເນື່ອງໃນໂອກາດວັນສ້າງຕັ້ງສາຍພົວພັນການທູດ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ເບລາຣຸດຊີ ຄົບຮອບ 30 ປີ (7/2/1994-7/2/2024).

ຂ້າພະເຈົ້າ ຫວັງເປັນຢ່າງຍິ່ງວ່າ ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ເບລາຣຸດຊີ ເວົ້າລວມ, ເວົ້າສະເພາະລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາຜູ້ແທນປະຊາຊົນເບລາຣຸດຊີ ຈະສືບຕໍ່ໄດ້ຮັບການເສີມຂະຫຍາຍເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດພວກເຮົາ.

ຂ້າພະເຈົ້າ ຂໍຖືໂອກາດນີ້ອວຍພອນໄຊອັນປະເສີດ ມາຍັງພະນະທ່ານ ຈົ່ງມີສຸຂະພາບແຂງແຮງ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນສູງສົ່ງ ແລະ ມີກຽດຂອງພະນະທ່ານ.

ດ້ວຍຄວາມນັບຖືຢ່າງສູງ;

ປອ. ໄຊສົມພອນ ພົມວິຫານ
ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ

## ຍົກລະດັບຄວາມຮູ້ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ



(ສພຊ) ກອງປະຊຸມເຝິກອົບຮົມການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃຫ້ແກ່ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດ ໄດ້ໄຂຂຶ້ນໃນວັນທີ 07 ກຸມພາ 2024 ທີ່ເມືອງແກ້ວອຸດົມແຂວງວຽງຈັນ ໂດຍການເປັນປະທານຂອງ ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ; ຈຸດປະສົງກໍເພື່ອເຮັດໃຫ້ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດ ໄດ້ຮັບການຍົກລະດັບຄວາມຮູ້, ຄວາມສາມາດ ແລະ ສົ່ງເສີມທັກສະທາງດ້ານວິຊາການກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ໃນການເປັນເສນາທິການທາງດ້ານວຽກງານຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຢ່າງເປັນລະບົບຄົບຊຸດ, ມີປະສິດທິພາບ, ຮັດກຸມ ແລະ ເປັນເອກະພາບ ຕອບສະໜອງໃຫ້ໄດ້ຄວາມຮຽກຮ້ອງຕ້ອງການໃນການປະຕິບັດໜ້າທີ່ວຽກງານຕົວຈິງ.

ອ່ານຕໍ່ໜ້າ 8

## ຮອງປະທານ ສພຊ ເຄື່ອນໄຫວ ເຮັດວຽກຢູ່ 3 ເມືອງ ແຂວງຄຳມ່ວນ



(ສພຊ) ໃນລະຫວ່າງວັນທີ 5-7 ກຸມພາ 2024 ທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 12 ພ້ອມດ້ວຍ ສສຊ ປະຈຳເຂດເລືອກຕັ້ງທີ 12, ສະມາຊິກສະພາປະຊາຊົນແຂວງ (ສສຂ) ຄຳມ່ວນ ແລະ ຄະນະຕິດຕາມ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ 3 ເມືອງຄື: ຍົມມະລາດ, ນາກາຍ ແລະ ຄູນຄຳ; ເຂົ້າຮ່ວມບັນດາທ່ານເຈົ້າເມືອງ-ຮອງເຈົ້າເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການທີ່

ອ່ານຕໍ່ໜ້າ 4

## ຍົກສູງຂີດຄວາມສາມາດ ສສຊ ແລະ ສສຂ ໃນການຕິດຕາມກວດກາ

ກອງປະຊຸມເຝິກອົບຮົມການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ກ່ຽວກັບການຕິດຕາມກວດກາຂົງເຂດວຽກງານຍຸຕິທຳ, ການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ ແລະ ການຕິດຕາມກວດກາວຽກງານຂອງອົງການກວດສອບ ໄດ້ຈັດຂຶ້ນໃນລະຫວ່າງວັນທີ7-8 ກຸມພາ 2024 ທີ່ແຂວງໄຊຍະບູລີ ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາ



ທິການສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ, ທ່ານ ອຳໄພ ຈິດມານົນ ຮອງປະທານກຳມາທິການກົດໝາຍ, ທ່ານ ທັນຕາ ກອງຜາລີ ຮອງປະ

ອ່ານຕໍ່ໜ້າ 3

# ຮອງປະທານສະພາແຫ່ງຊາດ ຕ້ອນຮັບອຸປະທູດຈີນ



(ສພຊ) ວັນທີ 31 ມັງກອນ 2024 ທີ່ຫ້ອງຮັບແຂກສະພາແຫ່ງຊາດ, ສະຫາຍ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ຫວາງ ຊ້າງ ອຸປະທູດຂອງເອກອັກຄະລັດຖະທູດ ແຫ່ງ ສປຈີນ ປະຈໍາ ສປປລາວ ເພື່ອມອບສານອວຍພອນຂອງສະຫາຍ ຈ້າວ ເລີຈີ້, ປະທານສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໃຫ້ສະຫາຍ ໄຊສົມພອນ ພົມວິຫານ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ເນື່ອງໃນໂອກາດປີໃໝ່ສາກົນ 2024.

ໂອກາດດັ່ງກ່າວ, ສະຫາຍຮອງປະທານສະພາແຫ່ງຊາດລາວ ກໍໄດ້ກ່າວສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ພ້ອມຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງ 2 ພັກ, 2 ລັດ ແລະ ປະຊາຊົນ 2 ຊາດ ລາວ-ຈີນ ກໍຄືລະຫວ່າງສອງອົງການນິຕິບັນຍັດໃນໄລຍະຜ່ານມາ, ໂດຍສະເພາະແມ່ນການປະຕິບັດແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊາຕາກໍາໄລຍະປີ2019-2023 ແລະ ໄລຍະປີ 2024-2028 ເຊິ່ງຈະເປັນໂອກາດດີສໍາຫຼັບສອງຝ່າຍໃນການເສີມຂະຫຍາຍສາຍພົວພັນໃນຂົງເຂດຕ່າງໆໃຫ້ນັບມື້ນັບມີປະສິດທິຜົນ. ສະຫາຍຮອງປະທານສະພາແຫ່ງຊາດລາວ ຕາງໜ້າໃຫ້ປະທານສະພາແຫ່ງຊາດ ກ່າວຝາກຄໍາອວຍພອນອັນປະເສີດໄປຍັງສະຫາຍປະທານສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ເນື່ອງໃນໂອກາດວັນປີໃໝ່ ຈົ່ງມີສຸຂະພາບເຂັ້ມແຂງ, ມີຜົນສໍາເລັດໃນການນໍາພາອົງການນິຕິບັນຍັດກ້າວຂຶ້ນຢ່າງເຂັ້ມແຂງ ທັງໄດ້ອວຍພອນໃຫ້ສະຫາຍ ຫວາງ ຊ້າງ ພ້ອມດ້ວຍພະນັກງານການນໍາ ກໍຄືພະນັກງານທັງໝົດຂອງສະຖານທູດຈີນ ຈົ່ງມີສຸກຂະພາບເຂັ້ມແຂງ, ມີຜົນສໍາເລັດຕະຫຼອດປີໃໝ່ ປີມັງກອນ 2024 ນີ້.

ຈາກນັ້ນ, ສະຫາຍຫວາງ ຊ້າງ ກໍໄດ້ກ່າວສະແດງຄວາມຂອບໃຈເປັນຢ່າງຍິ່ງຕໍ່ການຕ້ອນຮັບຢ່າງອົບອຸ່ນ ພ້ອມໄດ້ມອບສານອວຍພອນຂອງສະຫາຍ ຈ້າວ ເລີຈີ້, ປະທານສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໃຫ້ສະຫາຍ ໄຊສົມພອນ ພົມວິຫານ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ.

**(ກົງທະນູຄໍາ ພິພັດເສລີ)**

# ຮອງປະທານ ກປຊສ ເຜີຍແຜ່ຜົນສໍາເລັດ

## ກອງປະຊຸມສະໄໝສາມັນເທື່ອທີ 6 ຢູ່ເມືອງລ້ອງຊານ




(ສພຊ) ໃນລະຫວ່າງວັນທີ 29-31 ມັງກອນ 2024 ທ່ານ ພົຈວ. ສົມວັນ ທໍາມາໄຊ ຮອງປະທານກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ທັງເປັນສະມາຊິກສະພາແຫ່ງຊາດ(ສສຊ)ປະຈໍາເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ສົມທົບກັບ ສສຊ ປະຈໍາເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ໄຊສົມບູນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະພະນັກງານຫຼັກແຫຼ່ງແລະຜູ້ມີສິດເລືອກຕັ້ງຢູ່ເມືອງລ້ອງຊານ ເພື່ອເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ຂອງສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ຊຸດທີ II ຢູ່ 5 ຈຸດຄື: ກອງບັນຊາການທະຫານເມືອງ, ຫ້ອງການອ້ອມຂ້າງເມືອງ, ບ້ານຄອນວັດ-ນໍ້າຄຸຍ-ຫີນສໍ, ກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ບ້ານໂພນມ່ວງ; ໂດຍມີບັນດາທ່ານຄະນະປະຈໍາ-ກໍາມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ພະນັກງານບໍານານ, ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ອົງການປົກຄອງບ້ານອ້ອມຂ້າງເທສະບານເມືອງ ແລະ ປະຊາຊົນບັນດາເຜົ່າຜູ້ມີສິດເລືອກຕັ້ງ ເຂົ້າຮ່ວມຮັບຟັງທັງໝົດ221 ທ່ານ ຍິງ 80 ທ່ານ.

ໃນໂອກາດນີ້, ຫົວໜ້າກອງບັນຊາການທະຫານ ແລະ ຫົວໜ້າກອງບັນຊາການ ປກສ ເມືອງລ້ອງຊານ ໄດ້ລາຍງານໂດຍຫຍໍ້ສະພາບການເຄື່ອນໄຫວຂອງກົມກອງ ໂດຍສະເພາະແມ່ນຈຸດທີ່ຕັ້ງຂອງເມືອງ, ກົມກອງ, ຜົນສໍາເລັດໃນການຈັດຕັ້ງປະຕິບັດແຕ່ລະຂົງເຂດວຽກງານ ເປັນຕົ້ນວຽກງານການເມືອງ, ການທະຫານ, ຕໍາຫຼວດ ແລະ ພາລາທິການ.

ຫຼັງຈາກນັ້ນ, ສສຊແລະ ສສຂ ກໍໄດ້ຜັດປ່ຽນກັນເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຊ ຊຸດທີ IX ແລະ ຂອງ ສພຂ ຊຸດທີ II; ຜ່ານການຮັບຟັງການເຜີຍແຜ່, ບັນດາຜູ້ເຂົ້າຮ່ວມແມ່ນມີຄວາມເຂົ້າໃຈຕໍ່ບັນດາເອກະສານ ແລະ ມີຄວາມເອກະພາບສູງຕໍ່ການເຜີຍແຜ່ໃນຄັ້ງນີ້ ພ້ອມທັງສະເໜີຂໍງົບປະມານໃນການກໍ່ສ້າງໂຮງຮຽນແຕ່ລະບ້ານ, ວຽກການສຶກສາ, ສາທາລະນະສຸກ ແລະອື່ນໆອີກຈໍານວນໜຶ່ງ ເຊິ່ງຈະໄດ້ນໍາເອົາບັນດາຄໍາສະເໜີຂອງພໍ່ແມ່ປະຊາຊົນໄປໃຫ້ສະພາປະຊາຊົນແຂວງໄຊສົມບູນ ນໍາໄປພິຈາລະນາປະສານສົມທົບກັບພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂຕາມສະພາບເງື່ອນໄຂ.



# ເລື່ອງ ເດັ່ນ ຂ່າວ ເດັດ

*# ຄັດໂດຍ: ຫອມສະນິດ*

*❒ ອັດຕາເງິນເຟີ້ ໃນເດືອນມັງກອນ ປີ 2024 ເພີ່ມຂຶ້ນ 24,4% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຫຼືທຽບໃສ່ເດືອນມັງກອນ 2023 ໂດຍລວມແລ້ວການເໜັງຕີງບໍ່ແຕກຕ່າງຈາກເດືອນທັນວາ ປີ 2023 ທີ່ຜ່ານມາ (ເດືອນທັນວາ 2023 ຢູ່ໃນລະດັບ 24,37%). ໃນນັ້ນ, ໝວດສິນຄ້າທີ່ມີອັດຕາເງິນເຟີ້ເພີ່ມຂຶ້ນສູງແມ່ນໝວດຮ້ານອາຫານ ແລະ ໂຮງແຮມ ເພີ່ມຂຶ້ນ 35,9%, ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ ເພີ່ມຂຶ້ນ 33,4%,ໝວດຮັກສາສຸຂະພາບ ແລະ ຢາ ເພີ່ມຂຶ້ນ 31%, ໝວດສະບຽງອາຫານ ແລະ ເຄື່ອງດື່ມທີ່ບໍ່ມີທາດເຫຼົ້າ ເພີ່ມຂຶ້ນ 22%, ໝວດເຄື່ອງໃຊ້ໃນເຮືອນ ເພີ່ມຂຶ້ນ 24,5% ໝວດເຫຼົ້າ ແລະ ຢາສູບ ເພີ່ມຂຶ້ນ 22,2%, ໝວດສິນຄ້າ ແລະ ການບໍລິການອື່ນໆເພີ່ມຂຶ້ນ 21,1%.*

***ໜສພ. ປະຊາຊົນ 02/02/2024***

*❒ ສະເພາະເດືອນ 12 ປີ 2023, ມູນຄ່າການນໍາເຂົ້າ ແລະ ສົ່ງອອກ ສິນຄ້າ ຂອງ ສປປ ລາວ ບັນລຸໄດ້ ປະມານ 1.235 ລ້ານໂດລາ. ສິນຄ້າສົ່ງອອກທັງໝົດ ປະມານ 531,3 ລ້ານໂດລາ ແລະ ສິນຄ້ານໍາເຂົ້າທັງໝົດ ປະມານ 703,6 ລ້ານໂດລາ. ເມື່ອສັງເກດເບິ່ງດຸນ ລະຫວ່າງ ການນໍາເຂົ້າ ແລະ ສົ່ງອອກ ເຮົາຈະເຫັນວ່າ ໃນເດືອນດັ່ງກ່າວນີ້ແມ່ນຂາດດຸນປະມານ 172,3 ລ້ານໂດລາ.*

***ໜສພ. ປະຊາຊົນ 02/02/2023***

*❒ ແຜນການພັດທະນາກະສິກໍາ-ປ່າໄມ້ ແລະ ພັດທະນາຊົນນະບົດ 4 ແຜນງານ ຄື: 1. ແຜນງານການປະກັນສະບຽງອາຫານ ແລະ ໂພຊະນາການ: ສູ້ຊົນຜະລິດ ເຂົ້າໃຫ້ໄດ້ 3,86 ລ້ານໂຕນ ໂດຍສຸມໃສ່ 10 ແຂວງເປົ້າໝາຍ ຂອງໂຄງການຄໍ້າປະກັນສະບຽງອາຫານແຫ່ງຊາດ, ສູ້ຊົນຜະລິດພືດສະບຽງອາຫານ ປະມານ 279.680 ເຮັກຕາ, ຜົນຜະລິດ 2,46 ລ້ານໂຕນ. ການລ້ຽງສັດ ແລະ ປະມົງ ສູ້ຊົນຜະລິດ ຊີ້ນ, ໄຂ່ ແລະ ປາ ໃຫ້ ໄດ້ 554.000 ໂຕນ, ຂະຫຍາຍຝູງສັດ ຢູ່ໃນລະດັບ 3,5% ຕໍ່ປີ ແລະ ການປະມົງ ຂະຫຍາຍຕົວ 4,3%. 2. ແຜນງານການຜະລິດກະສິກໍາ ເປັນສິນຄ້າ: ດ້ານການຜະລິດ ສູ້ຊົນຜະລິດພືດ, ສັດ ແລະ ໄມ້ ເປັນສິນຄ້າສົ່ງອອກໃຫ້ໄດ້ 1,2 ຕື້ໂດລາ. ໃນນັ້ນ, ພືດໃຫ້ໄດ້ 1.100 ລ້ານໂດລາ ແລະ ສັດ ໃຫ້ໄດ້ 100 ລ້ານໂດລາ; ສູ້ຊົນຜະລິດງົວ ເພື່ອສົ່ງອອກ ລວມທັງສົ່ງອອກໄປ ສປ ຈີນ ໃຫ້ ໄດ້ 50.000 ໂຕ/ປີ, ຜະລິດນໍ້ານົມງົວ ໃຫ້ໄດ້50.000 ໂຕນ ສ່ວນດ້ານການເຈລະຈາດ້ານສຸຂານາໄມ ພືດ-ສັດ ແລະ ການສົ່ງອອກ ສືບຕໍ່ເຈລະຈາດ້ານສຸຂະນາໄມພືດ ແລະ ສັດ ກັບປະເທດຄູ່ຄ້າ ໂດຍສະເພາະບັນດາລາຍການສິນຄ້າບຸລິມະສິດຂອງລາວ ທີ່ໄດ້ປະເມີນຄວາມສ່ຽງສັດຕູພືດ ແລະ ໄດ້ສົ່ງໃຫ້ປະເທດຄູ່ຄ້າແລ້ວນັ້ນ ເຊັ່ນ: ສປ ຈີນ 28 ພືດ, ລາຊະອານາຈັກໄທ 5 ພືດ, ສສ. ຫວຽດນາມ 4 ພືດ ແລະ ປະເທດອື່ນໆ; ສືບຕໍ່ເຈລະຈາດ້ານສຸຂະນາໄມ ເພື່ອສົ່ງອອກຜະລິດຕະພັນຊີ້ນ ແລະ ປາ ກັບ ສປ ຈີນ ແລະ ສສ. ຫວຽດນາມ; 3. ແຜນງານຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້: ສືບຕໍ່ຈັດຕັ້ງຜັນຂະຫຍາຍບັນດາກົດໝາຍ ແລະ ນິຕິກໍາເປັນຕົ້ນຄໍາສັ່ງ 15/ນຍ, 05/ນຍ ແລະ 11/ນຍ ໃຫ້ເປັນຮູບປະທໍາ; ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນອອກເອກະສານສິດນໍາໃຊ້ທີ່ດິນໃຫ້ກັບປະຊາຊົນທີ່ອາໄສໃນເຂດ 3 ປະເພດປ່າ, ຊຸກຍູ້ສົ່ງເສີມຜູ້ປະກອບການໃນການພັດທະນາການທ່ອງທ່ຽວແບບອະນຸລັກທໍາມະຊາດ ຕິດພັນກັບສ້າງລາຍຮັບໃຫ້ກັບປະຊາຊົນໃນ 3 ປະເພດປ່າ; ສືບຕໍ່ພັດທະນາລະບົບທຽບຖານຂໍ້ມູນກ່ຽວກັບວຽກງານ REDD ໃຫ້ເປັນລະບົບເຊື່ອຖືໄດ້ຄຽງຄູ່ກັບການສົ່ງເສີມພາກເອກະຊົນທັງພາຍໃນແລະຕ່າງປະເທດເຂົ້າມາລົງທຶນໃສ່ວຽກງານດັ່ງກ່າວ; 4. ແຜນງານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ: ສືບຕໍ່ຈັດຕັ້ງປະຕິບັດຄໍາສັ່ງຂອງກົມການເມືອງສູນກາງພັກ ເລກທີ 097/ກມສພ, ຄໍາສັ່ງແນະນໍາຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 233/ຄລສພ; ກົດໝາຍ ວ່າດ້ວຍການຈັດສັນພູມລໍາເນົາ ແລະ ອາຊີບເລກທີ 45/ສພຊ, ດໍາລັດ 348/ລບ; ຂໍ້ຕົກລົງ ເລກທີ 72/ນຍ; ສູ້ຊົນສ້າງຄອບຄົວພົ້ນທຸກ ໃຫ້ໄດ້ 35.000 ຄອບຄົວ; ສ້າງບ້ານພົ້ນທຸກໃຫ້ໄດ້ 500 ບ້ານ; ສ້າງເມືອງພົ້ນທຸກໃຫ້ໄດ້ 15 ເມືອງ; ສ້າງຄອບຄົວພັດທະນາ ໃຫ້ໄດ້ 33.000 ຄອບຄົວ; ສ້າງບ້ານພັດທະນາ ໃຫ້ໄດ້ 500 ບ້ານ ແລະ ສ້າງເມືອງເຂັ້ມແຂງຮອບດ້ານໃຫ້ໄດ້ 4 ເມືອງ.*

***ໜສພ. ປະຊາຊົນ 02/02/2024***

# ຍົກລະດັບຄວາມຮູ້ການຄົ້ນຄວ້າ, ວິເຄາະ ແລະ ສົມທຽບມາດຕາຂອງກົດໝາຍ



(ສພຊ) ວັນທີ 5 ກຸມພາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ໄດ້ມີກອງປະຊຸມເຝິກອົບຮົມຍົກລະດັບຄວາມຮູ້ວຽກງານການຄົ້ນຄວ້າ, ວິເຄາະ ແລະ ສົມທຽບບາງມາດຕາຂອງກົດໝາຍ ໂດຍການເປັນປະທານຂອງທ່ານ ສາຍອູ ພູມສາລີ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ມີບັນດາທ່ານຫົວໜ້າ-ຮອງຫົວໜ້າສູນຄົ້ນຄວ້າວິທະຍາສາດ ແລະ ນິຕິກຳ, ຄະນະພະແນກ, ວິທະຍາກອນຊ່ຽວຊານວຽກງານລັດຖະສະພາ ປະຈຳອົງການສະຫະປະຊາຊາດເພື່ອການພັດທະນາ ພ້ອມດ້ວຍສຳມະນາກອນຈາກ ສນສ; ກົມກົດໝາຍ; ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ; ກົມຄຳຮ້ອງຂໍຄວາມເປັນທຳ; ກົມຄຸ້ມຄອງສະມາຊິກສະພາແຫ່ງຊາດ.

ທ່ານ ສາຍອູ ພູມສາລີ ມີຄຳເຫັນວ່າ: ກອງປະຊຸມຄັ້ງນີ້ເປັນໂອກາດອັນດີທີ່ຈະໄດ້ຮັບການເຝິກອົບຮົມເພື່ອຍົກລະດັບຄວາມຮູ້, ຄວາມສາມາດ ແລະ ແລກປ່ຽນບົດຮຽນໃນການຄົ້ນຄວ້າວຽກງານລັດຖະສະພາກັບຊ່ຽວຊານທີ່ມີປະສົບການສູງໃນວຽກງານຄົ້ນຄວ້າລັດຖະສະພາ; ເພື່ອສ້າງຄວາມເຂົ້າໃຈເຕັກນິກ, ວິທີການ, ຂັ້ນຕອນໃນການຄົ້ນຄວ້າ, ວິເຄາະ ແລະ ສົມທຽບບາງມາດຕາຂອງກົດໝາຍເພື່ອສັງລວມເປັນຂໍ້ມູນສະໜອງໃຫ້ແກ່ສະມາຊິກສະພາແຫ່ງຊາດໃນການພິຈາລະນາຮ່າງກົດໝາຍ ທັງເປັນການສ້າງຄວາມເຂັ້ມແຂງໃຫ້ພະນັກງານທີ່ຮັບຜິດຊອບວຽກງານຄົ້ນຄວ້າວິທະຍາສາດ ແລະ ນິຕິກຳ ເຊິ່ງຈະໄດ້ສະເໜີທັງພາກທິດສະດີ ແລະ ນຳພາຈັດຕັ້ງປະຕິບັດຕົວຈິງໄປພ້ອມໆກັນ. ດັ່ງນັ້ນ, ຮຽກຮ້ອງມາຍັງວິທະຍາກອນ ຈົ່ງສຸມໃສ່ການຖ່າຍທອດຄວາມຮູ້ ແລະ ປະສົບການທີ່ດີຂອງສາກົນ ແລະ ບັນດາທ່ານສຳມະນາກອນ ກໍໃຫ້ມີຄວາມຕັ້ງໃຈ ແລະ ເອົາໃຈໃສ່ຄົ້ນຄວ້າເກັບກຳເອົາບົດຮຽນ ແລະ ປະສົບການຈາກວິທະຍາກອນໄປ ພ້ອມໆກັບການເຝິກຫັດຕົວຈິງ ເພື່ອໃຫ້ສາມາດນຳໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານຕົວຈິງ.

ກອງປະຊຸມ, ໄດ້ຮັບຟັງການສະເໜີ 6 ຫົວຂໍ້ຄື: ຄວາມຮູ້ພື້ນຖານຂອງການຄົ້ນຄວ້າລັດຖະສະພາ; ການສົ່ງ ເສີມການບໍລິຫານຜົນງານການຄົ້ນຄວ້າຂອງສະຖາບັນ; ການໄດ້ມາຂອງຂໍ້ມູນ, ການວິເຄາະນະໂຍບາຍ ແລະ ກົດໝາຍ; ການວິເຄາະ ແລະການສົມທຽບບາງມາດຕາຂອງຮ່າງກົດໝາຍ; ທັກສະການຂຽນທີ່ມີປະສິດທິພາບ; ການກວດສອບຄຸນນະພາບຂອງບົດ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ຈັດແບ່ງກັນເປັນກຸ່ມເພື່ອຄົ້ນຄວ້າ, ສົນທະນາແລກປ່ຽນບົດຮຽນ, ແກ້ຂໍ້ຂ້ອງໃຈ ແລະ ການຂຶ້ນສະເໜີບົດຂອງແຕ່ລະກຸ່ມທີ່ໄດ້ຄົ້ນຄວ້າໃນແຕ່ລະຫົວຂໍ້ທີ່ທາງກອງປະຊຸມໄດ້ຍົກຂຶ້ນມາ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ; ເຊິ່ງກອງປະຊຸມດັ່ງກ່າວ, ດຳເນີນໄປຈົນຮອດວັນທີ 9 ກຸມພາ 2024 ຈຶ່ງສຳເລັດ.

**(ນາງ ສຸພາວັນ ທອນສະນິດ)**




## ຍົກສູງ...

(ຕໍ່ຈາກໜ້າ 1)

ທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ພ້ອມດ້ວຍ ສສຊ ແລະ ສສຂ ແຂວງບໍ່ແກ້ວ, ແຂວງຫຼວງພະບາງ, ແຂວງໄຊຍະບູລີ ແລະ ພະນັກງານທີ່ກ່ຽວຂ້ອງ.

ໃນວາລະຂອງກອງປະຊຸມ, ທ່ານ ເພັງນິລັນ ຄຳພັນເພັງ ປະທານສະພາປະຊາຊົນແຂວງໄຊຍະບູລີ ໄດ້ລາຍງານໂດຍຫຍໍ້ກ່ຽວກັບແຂວງໄຊຍະບູລີ ໂດຍຍົກໃຫ້ເຫັນຈຸດພິເສດທີ່ພົ້ນເດັ່ນ, ສິ່ງທ້າທາຍ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກຂອງແຂວງໃນໄລຍະ 1 ປີຜ່ານມາ. ຈາກນັ້ນ, ໄດ້ຮັບຟັງການສະເໜີບົດທັກສະການຕິດຕາມກວດກາວຽກງານແຜນການ, ການເງິນແລະການກວດສອບ ຈາກທ່ານ ທັນຕາ ກອງຜາລີ; ການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ ຈາກທ່ານ ອຳໄພ ຈິດມານົບ ແລະ ການຕິດຕາມກວດກາຂົງເຂດວຽກງານຍຸຕິທຳ ຈາກທ່ານຄຳແພງ ວິລະພັນ. ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ, ປະກອບຄຳເຫັນຕໍ່ກັບເນື້ອໃນຂອງບັນດາບົດດັ່ງກ່າວຢ່າງກົງໄປກົງມາ ໂດຍສົມທຽບໃສ່ກັບວຽກງານພາຍໃນແຂວງຂອງຕົນ ຈຶ່ງເຮັດໃຫ້ບັນດາຄຳເຫັນຕ່າງໆມີຄວາມຈະແຈ້ງ ທັງເປັນການແລກປ່ຽນບົດຮຽນ ແລະ ປະສົບການ ເຮັດໃຫ້ການປະຕິບັດວຽກງານ ກໍຄືການເຄື່ອນໄຫວວຽກງານທີ່ຕິດພັນກັບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ, ສະພາປະຊາຊົນແຂວງ ໃຫ້ນັບມື້ນັບມີປະສິດທິພາບ ແລະ ປະສິດທິຜົນດີຍິ່ງໆຂຶ້ນ.

ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ໃຫ້ຄຳເຫັນວ່າ: ຕະຫຼອດໄລຍະການດຳເນີນກອງປະຊຸມ, ຂ້າພະເຈົ້າຕີລາຄາສູງຕໍ່ຜົນສຳເລັດໃນຄັ້ງນີ້ ເຊິ່ງຜູ້ເຂົ້າຮ່ວມໄດ້ມີຄວາມເອົາໃຈໃສ່ຄົ້ນຄວ້າ ແລະ ສົນທະນາແລກປ່ຽນບົດຮຽນດ້ວຍຄວາມຕັ້ງໜ້າ, ວິທະຍາກອນ ກໍເອົາໃຈໃສ່ຖ່າຍທອດບົດຮຽນ ແລະ ສົມທຽບໃສ່ປະສົບການ ແລະ ນິຕິກຳຕົວຈິງທີ່ມີຄວາມຫຼາກຫຼາຍ, ອຸດົມສົມບູນ ເຮັດໃຫ້ບັນດາທ່ານມີຄວາມຮັບຮູ້, ເຂົ້າໃຈຕໍ່ກັບຫົວຂໍ້ກອງປະຊຸມເລິກເຊິ່ງຂຶ້ນຕື່ມ; ສຳລັບບັນຫາທີ່ຜູ້ເຂົ້າຮ່ວມຍົກຂຶ້ນມາຖາມມາແລກປ່ຽນນັ້ນ, ວິທະຍາກອນ ກໍໄດ້ແລກປ່ຽນອະທິບາຍຊີ້ແຈງບົນພື້ນຖານຫຼັກການຂອງກົດໝາຍ, ບົດຮຽນ ແລະ ນິຕິກຳຕົວຈິງທີ່ມີປະສິດທິຜົນດີທີ່ໄດ້ປະຕິບັດຜ່ານມາ ແລະ ກອງເລຂາໄດ້ບັນທຶກເກັບກຳລະອຽດແລ້ວ ເພື່ອນຳໄປເປັນຂໍ້ມູນໃນການປັບປຸງ. ທ່ານເລຂາທິການສະພາແຫ່ງຊາດ ຍັງໄດ້ເນັ້ນອີກວ່າ: ຜົນສຳເລັດຂອງກອງປະຊຸມໃນຄັ້ງນີ້ເປັນຜົນສຳເລັດເບື້ອງຕົ້ນຂອງພວກເຮົາ; ສະນັ້ນ, ເພື່ອເຮັດລ້ອນໜ້າທີ່ການເມືອງອັນມີກຽດທີ່ປະເທດຊາດ ແລະ ປະຊາຊົນມອບໝາຍໃຫ້ ໂດຍສະເພາະແມ່ນການຕິດຕາມກວດກາບັນດາອົງການອຳນາດລັດຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ເພື່ອຮັບປະກັນການປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ໃຫ້ມີຄຸນນະພາບດີຂຶ້ນເລື້ອຍໆ, ຂ້າພະເຈົ້າມີຄວາມເຊື່ອໝັ້ນຢ່າງໜັກແໜ້ນວ່າ ບັນດາທ່ານຈະນຳເອົາເນື້ອໃນ ແລະ ບົດຮຽນຈາກກອງປະຊຸມຄັ້ງນີ້ ໄປຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດໃຫ້ມີຜົນເປັນຮູບປະທຳໃນວຽກງານຕົວຈິງ, ເປັນປະໂຫຍດສູງສຸດຢູ່ໃນການປະຕິບັດໜ້າທີ່ ແລະ ການຈັດຕັ້ງຂອງຕົນ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານສົມທົບຈາກມູນນິທິເອເຊຍ ປະຈຳ ສປປລາວ.

**(ນາງ ອານິຕາ ມ່ວນສະຫວັດ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຮອງປະທານຄະນະປະຈຳສະພາແຫ່ງຊາດ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ຮອງລັດຖະມົນຕີກະຊວງ-ອົງການທີ່ກ່ຽວຂ້ອງ, ຮອງປະທານກຳມາທິການ ແລະ ຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ໃນກອງປະຊຸມ, ໄດ້ຮັບຟັງການລາຍງານແຜນການການສ້າງ ແລະ ປັບປຸງກົດໝາຍ ປະຈຳປີ 2024 ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 7 ແລະ ເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ແລະ ການເຜີຍ ແຜ່ຄຳແນະນຳ ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດ; ລາຍງານຜົນການຢ້ຽມຢາມ ແລະ ເຮັດວຽກຮ່ວມກັບສະພາແຫ່ງຊາດ ແຫ່ງ ສສ. ຫວຽດນາມ ຂອງຄະນະຮັບຜິດຊອບຄົ້ນຄວ້າ ແລະ ຮຽບຮຽງປະຫວັດຂອງສະພາແຫ່ງຊາດແຫ່ງ ສປປ ລາວ; ລາຍງານຂໍ້ທິດຊີ້ນຳກ່ຽວກັບການແຕ່ງຕັ້ງຄະນະກຳມະການລະດັບຊາດເພື່ອປັບປຸງລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປີ 2015; ຮ່າງແຜນການຕິດຕາມກວດກາຂອງກຳມາທິການບັນດາເຜົ່າ ປະຈຳປີ 2024 ກ່ຽວກັບການຈັດຕັ້ງປະຕິບັດມະຕິ 82/ສພຊ ໃນການຈັດຕັ້ງປະຕິບັດ ບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; ຄົ້ນຄວ້າການສະເໜີແຕ່ງຕັ້ງບຸກຄະລາກອນຂອງສານປະຊາຊົນ; ລາຍງານການສັງລວມບັນດາມະຕິກອງປະຊຸມສະພາແຫ່ງຊາດ ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ໃນສະພາແຫ່ງຊາດຊຸດທີ IX; ແຜນດຳເນີນການທາບທາມກົດໝາຍ 3 ສະບັບ ໃນຂົງເຂດສະພາແຫ່ງຊາດ; ຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານກ່ຽວກັບການສົ່ງບັນຊີໂຄງການລົງທຶນຂອງລັດລະດັບຊາດ ເພື່ອສະໜັບສະໜູນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ການຈັດສັນແຜນງົບປະມານເຂົ້າໃສ່ໂຄງການກໍ່ສ້າງຕາຝັ່ງເຈື່ອນ; ຄວາມຄືບໜ້າການປັບປຸງຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄລຍະ 3 ປີ (2021-2023); ຜົນການຄົ້ນຄວ້າໜັງສືສະເໜີຂອງອົງການກວດສອບແຫ່ງລັດ ກ່ຽວກັບການສະເໜີນະໂຍບາຍ ຫຼື ງົບປະມານສ່ວນໃດໜຶ່ງເພີ່ມຕື່ມ ໃນອັດຕາບໍ່ຫຼຸດ 5% ບົນພື້ນຖານມູນຄ່າ ຫຼື ຕົວເລກລວມຍອດປະຈຳປີຈາກການເກັບກູ້ ຫຼື ແກ້ໄຂຜົນການກວດສອບຕາມມະຕິກອງປະຊຸມສະພາແຫ່ງຊາດ; ລາຍງານແຜນການຕິດຕາມກວດກາປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດວັດທະນະທຳ-ສັງຄົມ ຈຳນວນ 4 ສະບັບ ຄື ກົດໝາຍວ່າດ້ວຍການສຶກສາ, ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ກົດໝາຍວ່າດ້ວຍແຮງງານ ແລະ ກົດໝາຍວ່າດ້ວຍປ້າຍ; ລາຍງານການກະກຽມກອງປະຊຸມສຳມະນາ WAIPA ຄັ້ງທີ II; ແຜນການກະກຽມ ແລະ ດຳເນີນກອງປະຊຸມພົບປະແລກປ່ຽນບົດຮຽນ ລະຫວ່າງຄະນະເລຂາທິການສະພາແຫ່ງຊາດ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ຄັ້ງທີ XII ທີ່ຈະຈັດຂຶ້ນຢູ່ແຂວງອຸດົມໄຊ; ລາຍງານວຽກງານການເງິນກ່ຽວກັບການຈັດສັນງົບປະມານປະຈຳປີ 2024 ຂອງສະພາແຫ່ງຊາດ.

ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າປະກອບຄຳເຫັນຢ່າງມີຈຸດສຸມ, ກົງໄປກົງມາ ຕໍ່ບັນດາບົດລາຍງານທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາຢ່າງມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດລວມມາສູ່ປະເທດຊາດ ແລະ ປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

**(ນາງ ສຸພາວັນ ທອນສະນິດ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

ກ່ຽວຂ້ອງຂອງແຂວງ, ຄະນະປະຈຳ-ກຳມະການພັກເມືອງ, ອະດີດການນຳຂອງເມືອງ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ), ຂະແໜງການ, ພະນັກງານຫຼັກແຫຼ່ງຂອງແຂວງ, ຂອງເມືອງ ແລະ ອຳນາດການປົກຄອງຂັ້ນບ້ານ.

ໂອກາດນີ້, ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບທີ່ຕັ້ງ ແລະ ຈຸດພິເສດຂອງແຕ່ລະເມືອງ, ດ້ານການເມືອງ-ແນວຄິດ, ວຽກງານ ປກຊ-ປກສ, ການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ, ດ້ານຂໍ້ຄົງຄ້າງ, ວຽກງານຈຸດສຸມໃນຕໍ່ໜ້າ ພ້ອມທັງຮັບຟັງຄຳຄິດ-ຄຳເຫັນ ແລະ ຄຳສະເໜີ; ຈາກນັ້ນ, ສສຊ ແລະ ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX ແລະ ຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II ໂດຍຍົກໃຫ້ເຫັນບັນຫາສຳຄັນຂອງຊາດຂອງແຂວງ ເປັນຕົ້ນວຽກງານຂອງລັດຖະບານ ແລະອົງການປົກຄອງທ້ອງຖິ່ນ, ວຽກງານຂົງເຂດສະພາ, ການປັບປຸງ ແລະ ຮັບຮອງເອົາກົດໝາຍແລະນິຕິກຳໃຕ້ກົດໝາຍ, ຮັບຮອງເອົາບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ໄລຍະ 3 ປີຜ່ານມາ (2021-2023), ທິດທາງແຜນການຕິດຕາມກວດກາໃນຕໍ່ໜ້າຂອງສະພາ ແລະ ບັນດາເນື້ອໃນເອກະສານບົດລາຍງານຕ່າງໆທີ່ນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມ.

ທ່ານ ຄຳໃບ ດຳລັດ ໄດ້ມີຄຳເຫັນໂອ້ລົມ ໂດຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຜົນງານອັນພົ້ນເດັ່ນຂອງເມືອງທີ່ຍາດມາໄດ້ ພ້ອມທັງເນັ້ນໜັກໃຫ້ເອົາໃຈໃສ່ຍົກສູງຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາ 2 ຂັ້ນ ແລະ ເຊື່ອມຊຶມບັນດາມະຕິ, ຄຳສັ່ງ, ຄຳແນະນຳຂອງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ເພື່ອຕັ້ງໜ້າກະກຽມໃຫ້ດີແລະດຳເນີນໃຫ້ຖືກຕ້ອງ, ໃຫ້ເຂັ້ມງວດ; ສ້າງຄວາມເຂົ້າໃຈໃຫ້ປະຊາຊົນລາວບັນດາເຜົ່າໄດ້ຮັບຮູ້, ເຂົ້າໃຈລັດຖະທຳມະນູນ ແລະ ກົດໝາຍຢ່າງເລິກເຊິ່ງຍິ່ງຂຶ້ນ; ທຸກພາກສ່ວນເຮັດໜ້າທີ່ຕາມພາລະບົດບາດຂອງຕົນດ້ວຍຄວາມເອົາໃຈໃສ່, ມີຄວາມຮັບຜິດຊອບ ແລະ ມີຄວາມຖືກຕ້ອງຍຸຕິທຳ; ພ້ອມກັນສຸມໃສ່ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດຄື: ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ແກ້ໄຂບັນຫາຢາເສບຕິດ ໃຫ້ປາກົດຜົນເປັນຈິງ; ການກໍ່ສ້າງພື້ນຖານໂຄງລ່າງຂອງເມືອງ ແລະ ໃຫ້ເອົາໃຈໃສ່ບັນຫາຜົນກະທົບຕໍ່ສິ່ງແວດລ້ອມ, ການຈັດສັນທີ່ຢູ່ອາໄສໃຫ້ປະຊາຊົນມີບ່ອນທຳການຜະລິດກະສິກຳ, ຊົນລະປະທານ, ການສ້າງວຽກເຮັດງານທຳ, ການທ່ອງທ່ຽວ ແລະ ການສ້າງບຸກຄະລາກອນສືບທອດ.

ໂອກາດທີ່ມາເຄື່ອນໄຫວຢ້ຽມຢາມ, ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງຄູນຄຳ ທ່ານຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ, ຕິດຕາມຄວາມຄືບໜ້າຂອງໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າຫີນບູນ ໂດຍທ່ານ ແສງເພັດ ຍາບັນດິດ ຮອງຫົວໜ້າໂຄງການເຂື່ອນໄຟຟ້ານໍ້າຫີນບູນ ໄດ້ໃຫ້ຮູ້ໂດຍຫຍໍ້ວ່າ: ໂຄງການເຂື່ອນໄຟຟ້ານໍ້າຫີນບູນ ມີມູນຄ່າທັງໝົດ 89,97 ລ້ານໂດລາ, ມີກຳລັງຕິດຕັ້ງ 30 MW, ຄວາມຄືບໜ້າທັງໝົດໂຄງການ 89,66%.

ໃນການເຄື່ອນໄຫວຄັ້ງນີ້, ຄະນະຍັງໄດ້ໄປຢ້ຽມຊົມຝາຍນໍ້າລົ້ນຫ້ວຍຂະມ້າ ບ້ານພົດສີໃຄ, ໂຄງການປູກຜັກເຮືອນຮົ່ມ ບ້ານນາລາດຄວາຍ ເມືອງຍົມມະລາດ; ພົບປະຢ້ຽມຢາມປະຊາຊົນຢູ່ບ້ານໜອງຮາງ ແລະ ບ້ານຄູນມະນີເມືອງຄູນຄຳ ເຂດຈັດສັນທີ່ຢູ່ອາໄສໃຫ້ປະຊາຊົນອີກດ້ວຍ.

**(ເອື້ອ ມະໂນສິງ)**

## ວາງສະແດງ...

(ຕໍ່ຈາກໜ້າ 1)

02/2024) ໂດຍການເຂົ້າຮ່ວມຕັດແຖບຜ້າເປີດງານດັ່ງກ່າວຂອງສະຫາຍ ບຸນທອງ ຈິດມະນີ ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ; ເຂົ້າຮ່ວມມີບັນດາສະຫາຍການນຳຂັ້ນສູງ ແລະ ອະດີດການນຳຂັ້ນສູງຂອງພັກ-ລັດ, ພັນລະຍາຂອງປະທານ ຄຳໄຕ ສີພັນດອນ ພ້ອມດ້ວຍລູກຫຼານ, ບັນດາທ່ານລັດຖະມົນຕີ-ຮອງລັດຖະມົນຕີ ແລະ ແຂກທີ່ຖືກເຊີນ ເຊິ່ງຄະນະຂອງສະພາແຫ່ງຊາດນຳໂດຍສະຫາຍ ສິງຄຳ ວົງພະຈັນ ຮອງເລຂາຄະນະພັກຮາກຖານ, ຮອງເລຂາທິການສະພາແຫ່ງຊາດ.

ໃນພິທີ, ທ່ານ ຄຳພັນ ເຜີຍຍະວົງ ຄະນະເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ປະທານສະພາທິດສະດີສູນກາງພັກ ໄດ້ກ່າວເປີດພິທີວ່າ: ເພື່ອສ້າງຂະບວນການອັນຄຶກຄື້ນເນື່ອງໃນວັນເກີດຂອງປະທານ ຄຳໄຕ ສີພັນດອນ ຄົບຮອບ 100 ປີ, ພວກເຮົາພ້ອມກັນຈັດງານວາງສະແດງຄັ້ງນີ້ເພື່ອລະນຶກເຖິງຄຸນງາມຄວາມດີ ແລະ ຜົນງານອັນໃຫຍ່ຫຼວງຂອງເພິ່ນທີ່ມີຕໍ່ປະເທດຊາດ ແນໃສ່ຮຽນຮູ້ ແລະ ນຳເອົາແບບຢ່າງທີ່ດີຂອງເພິ່ນໝູນໃຊ້ເຂົ້າໃນການຈັດຕັ້ງ, ເຄື່ອນໄຫວ ແລະ ການດຳລົງຊີວິດຂອງພະນັກງານ, ສະມາຊິກພັກ, ປະຊາຊົນ ແລະ ຊັ້ນຄົນຕ່າງໆ ເພື່ອສືບຕໍ່ພັດທະນາປະເທດຊາດ ກ້າວຂຶ້ນຕາມອຸດົມການຂອງພັກຢ່າງມີໄຊ. ງານວາງສະແດງໄດ້ແບ່ງອອກເປັນ 5 ພາກຄື: ພາກທີ 1: ບ້ານເກີດເມືອງນອນ, ໄລຍະເຍົາໄວ ແລະ ໄລຍະໄວໜຸ່ມຂອງປະທານ ຄຳໄຕ ສີພັນດອນ (1924-1946); ພາກທີ 2: ເຂົ້າຮ່ວມຂະບວນການຕໍ່ສູ້ເພື່ອຄວາມເປັນເອກະລາດ ແລະ ອິດສະຫຼະພາບ ຕ້ານກັບການຮຸກຮານຍຶດຄອງຂອງພວກລ່າເມືອງຂຶ້ນແບບເກົ່າ ແລະ ຂຸນເສິກຍີ່ປຸ່ນ (1947-1954); ພາກທີ 3: ປະທານ ຄຳໄຕ ສີພັນດອນ ປະກອບສ່ວນນຳພາການປະຕິວັດຊາດ ປະຊາທິປະໄຕ ໃນພາລະ ກິດຕໍ່ສູ້ຕ້ານການຮຸກຮານຂອງຈັກກະພັດອາເມລິກາ ແລະ ລູກມື (1955-1975); ພາກທີ 4: ປະທານ ຄຳໄຕ ສີພັນດອນ ພ້ອມກັບສູນກາງພັກປະຊາຊົນ ປະຕິວັດລາວ ໄດ້ນຳພາ-ຊີ້ນຳພາລະກິດປົກປັກຮັກສາ ແລະ ສ້າງສາປະ ເທດຊາດ, ສືບຕໍ່ນຳພາພາລະກິດປ່ຽນແປງໃໝ່ຮອບດ້ານມີຫຼັກການຂອງພັກຢ່າງມີໄຊຕະຫຼອດມາ (1976-ປັດຈຸບັນ); ພາກທີ 5: ປະທານ ຄຳໄຕ ສີພັນດອນ ກັບວຽກງານການຕ່າງປະເທດ. ໃນຈຳນວນ 5 ພາກດັ່ງກ່າວປະກອບມີບັນດາຮູບພາບວາງສະແດງ 275 ແຜ່ນ, ເອກະສານ 30 ສະບັບ ແລະ ວັດຖຸພັນ 20 ລາຍການ.

ທ່ານ ໄຊຍະລາດ ພົງຍາລັກ ຫົວໜ້າກົມພິພິທະພັນ ໄກສອນ ພົມວິຫານ ແລະ ອະນຸສອນສະຖານຜູ້ນຳປະຕິວັດ, ຫ້ອງວ່າການສູນກາງພັກ ໄດ້ກ່າວວ່າ: ງານດັ່ງກ່າວນີ້ ກໍເພື່ອໂຄສະນາເຜີຍແຜ່ຊີວິດ ແລະ ການເຄື່ອນໄຫວປະຕິວັດຂອງປະທານ ຄຳໄຕ ສີພັນດອນ ທີ່ໄດ້ອຸທິດສະຕິປັນຍາ, ກຳລັງວັງຊາ ປະກອບສ່ວນອັນໃຫຍ່ຫຼວງໃຫ້ແກ່ພາລະກິດປະຕິວັດຂອງພັກ, ຂອງປະຊາຊົນລາວບັນດາເຜົ່າໃນໄລຍະຜ່ານມາເພື່ອໃຫ້ມວນຊົນທັງພາຍໃນ ແລະ ຕ່າງປະເທດ ຮັບຮູ້ເຂົ້າໃຈຢ່າງກວ້າງຂວາງເລິກເຊິ່ງ. ພ້ອມດຽວກັນນີ້, ເພື່ອສ້າງເງື່ອນໄຂໃຫ້ພະນັກງານ, ສະມາຊິກພັກ, ນັກຮົບ ແລະ ປະຊາຊົນໄດ້ສຶກສາຮ່ຳຮຽນແບບຢ່າງອັນໃສແຈ້ງ, ຄຸນສົມບັດສິນທຳປະຕິວັດ ແລະ ຄຸນງາມ ຄວາມດີ ຜົນງານອັນໃຫຍ່ຫຼວງ ແລະ ແບບຢ່າງທີ່ດີເລີດຂອງປະທານ ຄຳໄຕ ສີພັນດອນ; ທັງເປັນການສຶກສາອົບຮົມທາງດ້ານການເມືອງແນວຄິດໃຫ້ພະນັກງານ, ສະມາຊິກພັກ, ທະຫານ, ຕຳຫຼວດ, ນັກຮຽນຮູ້ ຕະຫຼອດເຖິງປະຊາຊົນລາວບັນດາເຜົ່າ, ແຂກພາຍໃນ ແລະ ຕ່າງປະເທດ ຮັບຮູ້ເຖິງຜົນງານການເຄື່ອນໄຫວຂອງປະທານ ຄຳໄຕ ສີພັນດອນ ແລະ ຜູ້ນຳພັກ-ລັດທ່ານອື່ນໆ.

ງານວາງສະແດງຮູບພາບ, ເອກະສານ, ປຶ້ມ ແລະ ວັດຖຸພັນ ພາຍໃຕ້ຫົວຂໍ້: "ຊີວິດ ແລະ ການເຄື່ອນໄຫວປະຕິວັດຂອງປະທານ ຄຳໄຕ ສີພັນດອນ" ໄດ້ເລີ່ມເປີດໃຫ້ບັນດາທ່ານຜູ້ທີ່ມີຈຸດປະສົງເຂົ້າຊົມ ແມ່ນສາມາດເຂົ້າມາໄດ້ໃນວັນ ແລະ ເວລາລັດຖະການ ໂດຍງານຄັ້ງນີ້ຈັດຂຶ້ນເປັນເວລາ 3 ເດືອນ ນັບແຕ່ມື້ເປີດງານ ເຊິ່ງຄົນລາວເຮົາແມ່ນເຂົ້າຊົມໂດຍບໍ່ເສຍຄ່າ, ສ່ວນຄົນຕ່າງປະເທດແມ່ນໄດ້ຊື້ປີ້ເຂົ້າຊົມ ໃນລາຄາ 5.000 ກີບ.

**(ສອນສັກ ວັນວິໄຊ)**








# ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຂ ຈຳປາສັກ ອັດລົງດ້ວຍຜົນສຳເລັດຢ່າງຈົບງາມ

(ສພຊ) ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ຊຸດທີ II ໄດ້ໄຂຂຶ້ນໃນຕອນເຊົ້າຂອງວັນທີ 16 ມັງກອນ ແລະ ອັດລົງໃນວັນທີ 17 ມັງກອນ 2024 ຜ່ານມາ ດ້ວຍຜົນສຳເລັດຢ່າງຈົບງາມ, ທີ່ສະໂມສອນແຂວງ ໂດຍເປັນປະທານຂອງທ່ານ ສາຍທອງ ໄຊຍະວົງ ປະທານ ສພຂ ຮ່ວມມີທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ທ່ານ ວິໄລວົງ ບຸດດາຄຳ ເຈົ້າແຂວງຈຳປາສັກ, ມີຮອງເຈົ້າແຂວງ, ຄະນະປະຈຳ ສພຂ, ສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນແຂວງ (ສສຂ), ພະແນກການ, ກົມກອງອ້ອມຂ້າງແຂວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ຕົວແທນບັນດາເຜົ່າ ແລະ ສາສະໜາພາຍໃນແຂວງ ລວມທັງໝົດ 300 ກວ່າທ່ານ.

ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ນຳເນີນມາເປັນເວລາ 2 ວັນ ເຕັມໄປດ້ວຍບັນຍາກາດທີ່ສ້າງສັນ ແລະ ມີຄວາມເປັນເອກະພາບສູງ ຂອງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15, ສະມາຊິກສະພາປະຊາຊົນແຂວງ ໃນການຄົ້ນຄວ້າ, ປະກອບຄຳຄິດ-ຄຳເຫັນຢ່າງກົງໄປກົງມາ ຕໍ່ບັນດາເນື້ອໃນ ທີ່ນຳມາພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມຄັ້ງນີ້. ເພື່ອຮ່ວມກັນແກ້ໄຂບັນຫາຄວາມຫຍຸ້ງຍາກທີ່ແຂວງຂອງພວກເຮົາກຳລັງປະເຊີນຢູ່ໃນປັດຈຸບັນ.




ທ່ານ ສາຍທອງ ໄຊຍະວົງ ໄດ້ກ່າວສູນທອນພິດອັດກອງປະຊຸມ ເຊິ່ງມີເນື້ອໃນບາງຕອນສຳຄັນວ່າ: ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຂ ຊຸດທີ II ໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນ ອອກເປັນມະຕິກອງປະຊຸມສະພາປະຊາຊົນແຂວງຈຳປາສັກ ຈຳນວນ 9 ສະບັບ ຄື:

1) ມະຕິກອງປະຊຸມສະພາປະຊາຊົນແຂວງວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງຈຳປາສັກ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024 ຂອງແຂວງຈຳປາສັກ;

2) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງຈຳປາສັກ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2023 ແລະ ແຜນການປະຈຳປີ 2024 ຂອງແຂວງຈຳປາສັກ;

3) ມະຕິກອງປະຊຸມສະພາປະຊາຊົນແຂວງວ່າດ້ວຍການຮັບຮອງເອົາບົດສະຫຼຸບການຈັດຕັ້ງປະຕິບັດວາລະຂອງແຂວງຕາມເນື້ອໃນວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃນໄລຍະ 3 ປີ 2021-2023;

4) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດສະຫຼຸບການຈັດຕັ້ງປະຕິບັດວາລະຂອງແຂວງຕາມເນື້ອໃນວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 3 ປີ 2021-2023;

5) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະທິດທາງແຜນການ ປະຈຳປີ 2024 ແລະ ບົດລາຍງານຜົນການກວດກາຕາມຜົນການກວດສອບ ປະຈຳປີ 2021 ຂອງອົງການກວດກາລັດແຂວງ;

6) ມະຕິກອງປະຊຸມສະພາປະຊາຊົນແຂວງວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ແລະ ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022 ຂອງອົງການກວດສອບປະຈຳພາກໃຕ້;

7) ມະຕິກອງປະຊຸມສະພາປະຊາຊົນແຂວງວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນພາກໃຕ້ ແລະ ອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2024;

8) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງສານປະຊາຊົນພາກໃຕ້ແລະສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2024;

9) ມະຕິກອງປະຊຸມສະພາປະຊາຊົນແຂວງວ່າດ້ວຍການຮັບຮອງເອົາບົດລາຍງານຂອງສະພາປະຊາຊົນແຂວງ ການຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະແຜນການປະຈຳປີ 2024.

ຕໍ່ກັບບັນດເນື້ອໃນມະຕິກອງປະຊຸມສະພາປະຊາຊົນແຂວງຈຳປາສັກ ທີ່ກ່າວມາຂ້າງເທິງນັ້ນ ຈະເປັນພື້ນຖານທີ່ສຳຄັນ ໃຫ້ອົງການປົກຄອງແຂວງຈຳປາສັກ ສືບຕໍ່ໃນການນຳພາ-ຊີ້ນຳ ບັນດາຂະແໜງການ ພ້ອມທັງປຸກລະດົມ ປະຊາຊົນລາວບັນດາເຜົ່າຊາວແຂວງຈຳປາສັກ ສູ້ຊົນຜ່ານຜ່າຂໍ້ຫຍຸ້ງຍາກ ທາງດ້ານເສດຖະກິດ-ການເງິນ, ສືບຕໍ່ຈັດຕັ້ງປະຕິບັດບັນດານະໂຍບາຍ, ມາດຕະການ, ທາງດ້ານເສດຖະກິດ-ສັງຄົມ ໃຫ້ມີປະສິດທິຜົນ ເພື່ອແກ້ໄຂສິ່ງອຸດຕັນ ໃນການຄຸ້ມຄອງ ແລະ ບໍລິຫານລັດໃນຂະແໜງການຕ່າງໆ ໃຫ້ມີຄວາມໂລ່ງລ່ຽນຕາມກົດໝາຍກຳນົດໄວ້.

ຜົນສຳເລັດຂອງກອງປະຊຸມໃນຄັ້ງນີ້ແມ່ນໝາກຜົນອັນລວມຍອດຕໍ່ການເສີມຂະຫຍາຍສະຕິປັນຍາລວມໝູ່, ການປະສານສົມທົບຢ່າງກົມກຽວ ແຕ່ຫົວທີລະຫວ່າງ ສະພາປະຊາຊົນແຂວງກັບອົງການປົກຄອງແຂວງ, ລະຫວ່າງ ບັນດາຄະນະກຳມະການຂອງສະພາປະຊາຊົນແຂວງກັບບັນດາພະແນກການ, ອົງການທີ່ກ່ຽວຂ້ອງຂອງແຂວງ ທີ່ໄດ້ສຸມສະຕິປັນຍາ, ເຊີດຊູຄວາມຮັບຜິດຊອບໃນການຄົ້ນຄວ້າ ແລະ ນຳສະເໜີຜ່ານໃນກອງປະຊຸມຄັ້ງນີ້, ການປະກອບຄຳຄິດເຫັນຕໍ່ບັນດາເນື້ອໃນທີ່ນຳມາພິຈາລະນາ ແລະ ຮັບຮອງເອົາ ໃນກອງປະຊຸມຄັ້ງນີ້ ມີລັກສະນະສ້າງສັນ, ມີເຫດຜົນ, ມີເນື້ອໃນເລິກເຊິ່ງ.

**(ສົມວິຈິດ ໄຊມິນຕີ)**

# ອັດຕະປື ເປີດຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ

(ສພຂ) ພິທີເປີດຂະບວນການແຂ່ງຂັນຮັກຊາດແລະພັດທະນາ ຂອງສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ຈັດຂຶ້ນໃນວັນທີ 9 ມັງກອນ 2024 ທີ່ຫ້ອງປະຊຸມ ສພຂ ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານ ສພຂ, ມີຄະນະປະຈຳ ສພຂ, ຄະນະກຳມະການ, ຄະນະເລຂາທິການ ແລະ ພະນັກງານ-ລັດຖະກອນ ພາຍໃນ ສພຂ ພ້ອມດ້ວຍແຂກທີ່ຖືກເຊີນເຂົ້າຮ່ວມຢ່າງພ້ອມພຽງ.




ໃນພິທີ ທ່ານ ນາງ ແສງອາລຸນ ວົງສາທິການ ເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານແຜນການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ໄລຍະ 5 ປີ (2021-2025) ຂອງ ສພຂ ເຊິ່ງສະແດງໃຫ້ເຖິງແຜນວຽກ,ແຜນງານ ເພື່ອປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໃນການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການອຳນາດລັດຂັ້ນທ້ອງຖິ່ນ, ປະຕິບັດພາລະບົດບາດ ພິຈາລະນາ ແລະ ຮັບຮອງເອົານິຕິກຳທີ່ສຳຄັນຂອງທ້ອງຖິ່ນ, ຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ຕິດຕາມກວດກາການເຄົາລົບປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ສືບຕໍ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເຜີຍແຜ່, ເຊື່ອມຊຶມບັນດານິຕິກຳຂອງ ສພຂ, ກົດໝາຍສະພາແຫ່ງຊາດ, ກົດໝາຍສະພາປະຊາຊົນຂັ້ນແຂວງ, ມະຕິ, ຄຳສັ່ງ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງໃຫ້ບັນດາສະມາຊິກພັກ, ພະນັກງານ-ລັດຖະກອນ ຮັບຮູ້ເຂົ້າໃຈຢ່າງກວ້າງຂວາງເລິກເຊິ່ງ ແລະ ເປັນລະບົບຕໍ່ເນື່ອງ, ຜັນຂະຫຍາຍແນວທາງແຜນການເຄື່ອນໄຫວຂອງຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ ແລະ ຄະນະເລຂາທິການ ເປັນແຜນງານ, ໂຄງການ, ກິດຈະກຳອັນລະອຽດ, ຖືກຕ້ອງຕາມລະບຽບການ ແລະ ສະພາບເງື່ອນໄຂຕົວຈິງ, ນຳເອົາຜົນສຳເລັດກອງປະຊຸມສະພາແຫ່ງຊາດຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ແຕ່ລະຄັ້ງ ຜັນຂະຫຍາຍ ພົບປະຜູ້ມີສິດເລືອກຕັ້ງໃຫ້ກວ້າງຂວາງທົ່ວເຖິງ ແທດກັບເປົ້າໝາຍຕົວຈິງໃຫ້ຫຼາຍຂຶ້ນ. ດັ່ງຄຳຂວັນທີ່ວ່າ: ສ້າງສະພາປະຊາຊົນແຂວງໃຫ້ສົມເປັນອົງການຕົວແທນແຫ່ງສິດຜົນປະໂຫຍດອັນຊອບທຳ ຂອງປະຊາຊົນລາວບັນດາເຜົ່າຊາວແຂວງອັດຕະປື, ຮັບປະກັນໃຫ້ສະມາຊິກສະພາປະຊາຊົນແຂວງປະຕິບັດໜ້າທີ່ຄົບຖ້ວນ ຕາມສິດ, ໜ້າທີ່ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ, ຍົກສູງຄຸນນະພາບ ໃນການຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃຫ້ມີຄວາມສັກສິດ ເຮັດໃຫ້ແຂວງມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບປອດໄພ, ສາມັກຄີປອງດອງ ຍຸຕິທຳ ບົນພື້ນຖານສະເໝີພາບໃຕ້ກົດໝາຍ.

ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ມີຄຳເຫັນໃຫ້ທິດຊີ້ນຳຕໍ່ພິທີວ່າ: ສືບຕໍ່ຍູ້ແຮງການຈັດຕັ້ງປະຕິບັດຂະບວນການແຂ່ງຂັນຮັກຊາດ-ຍ້ອງຍໍ ແລະ ພັດທະນາໃຫ້ເປັນຂະບວນການຟົດຟື້ນ ກວ້າງຂວາງ ແລະ ຕໍ່ເນື່ອງ, ພ້ອມກັນສຸມໃສ່ພັດທະນາຕົນເອງ ແລະ ພັດທະນາວິຊາສະເພາະໃຫ້ມີຄວາມເຂັ້ມແຂງ, ເພີ່ມທະວີໃນການຊີ້ນຳ-ນຳພາ, ຈັດຕັ້ງປະຕິບັດ ແນວທາງນະໂຍບາຍຂອງພັກລະບຽບກົດໝາຍຂອງລັດ, ສ້າງໃຫ້ໄດ້ການຫັນປ່ຽນຢ່າງຕັ້ງໜ້າ, ສືບຕໍ່ຮັບປະກັນໂຄງປະກອບກົງຈັກການຈັດຕັ້ງຂອງ ສພຂ ໃຫ້ມີສະຖຽນລະພາບທາງດ້ານການເມືອງ ມີຄວາມເປັນລະບຽບຮຽບຮ້ອຍ, ເພີ່ມທະວີການຄຸ້ມຄອງລັດຄຸ້ມຄອງສັງຄົມຕາມລະບຽບກົດໝາຍ ເສີຍຂະຫຍາຍບົດບາດສະພາປະຊາຊົນແຂວງ ໃຫ້ສູງຂຶ້ນເທື່ອລະກ້າວ.

**(ວິນັດ ສີສຸລາດ)**

# ບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນ ຢູ່ແຂວງຊຽງຂວາງ

ທ່ານ ປອ. ໄມສີ ວຽງວິໄລ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ IX ແຂວງຊຽງຂວາງໄດ້ໃຫ້ການສຳພາດກ່ຽວກັບສະພາບພົ້ນເດັ່ນຂອງແຂວງຊຽງຂວາງ ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ່ 6 ຂອງສະພາແຫ່ງຊາດ ຊຸດທີ IX ວ່າ:

ໂດຍປະຕິບັດຕາມມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ແລະ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ່ IX ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງຊຽງຂວາງ ແລະ ປະຕິບັດສິດ, ພາລະບົດບາດຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ໃນໄລຍະ 10 ເດືອນຜ່ານມາ ຂ້າພະເຈົ້າຂໍຕາງໜ້າຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 9 ຂໍມີຄຳເຫັນລາຍງານສະພາບພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງຄື:

ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ພ້ອມກັນນີ້ໄດ້ ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ກໍຄືມະຕິກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ເປັນຕົ້ນ ການຈັດກອງປະຊຸມທາບທາມຮ່າງກົດໝາຍໄດ້ 4 ຄັ້ງ, ຈຳນວນ 22 ສະບັບ, ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 80/ສພຊ, ລົງວັນທີ 30 ທັນວາ 2022 ຮັບຮອງເອົາແຜນສ້າງກົດໝາຍຈຳນວນ 25 ສະບັບ; ຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຢູ່ 7 ເມືອງທົ່ວແຂວງ; ຄົ້ນຄວ້າຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ຕາມການສະເໜີຂອງອົງການປົກຄອງແຂວງ.

ຄຽງຄູ່ກັບດ້ານພົ້ນເດັ່ນຂ້າງເທິງນັ້ນ, ພາຍໃນແຂວງຍັງມີບາງບັນຫາທີເຄັ່ງຮ້ອນອື່ນເປັນສິ່ງທ້າທາຍຕໍ່ການພັດທະນາເສດຖະກິດ-ສັງຄົມ, ຈັງຫວະການຂະຫຍາຍຕົວທາງດ້ານເສດຖະກິດມະຫາພາກຍັງບໍ່ທັນເຂັ້ມແຂງເທົ່າທີ່ຄວນ, ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຍັງບໍ່ໄດ້ດີ, ການຄຸ້ມຄອງໂຄງການຊອກສຳຫວດ ແລະ ຂຸດຄົ້ນແຮ່ທາດຍັງບໍ່ທັນຄຸ້ມຄອງໄດ້ຕາມສັນຍາ ແລະ ຂັ້ນຕອນຂອງລະບຽບການບາງໂຄງການຍັງສ້າງບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການດຳລົງຊີວິດຂອງປະຊາຊົນ ແລະ ຍັງບໍ່ໄດ້ຮັບການແກ້ໄຂ; ນອກນີ້, ຍັງມີປະຊາຊົນຈຳນວນໜຶ່ງລັກລອບຂຸດຄົ້ນແຮ່ຄຳຊະຊາຍຢູ່ບາງຈຸດ; ການຊຸກຍູ້ສົ່ງເສີມການຜະລິດຍັງບໍ່ທັນແຂງແຮງ; ບາງຂົງເຂດຍັງມີການບຸກລຸກຈັບຈອງທີ່ດິນຊະຊາຍ ເຮັດໃຫ້ມີຜົນກະທົບຕໍ່ໂຄງການພັດທະນາຈຳນວນໜຶ່ງ.



● ວິທີແກ້ໄຂ:

ສົມທົບຕິດຕາມ ແລະ ຊຸກຍູ້ຂະແໜງການທີ່ກ່ຽວຂ້ອງຂອງແຂວງ, ຂອງເມືອງຈັດຕັ້ງປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ; ບັນຫາທີ່ຫຍຸ້ງຍາກ ແລະ ສຳຄັນໄດ້ນຳເຂົ້າຄົ້ນຄວ້າໃນ ກອງປະຊຸມຄະນະປະຈຳ ສະພາປະຊາຊົນແຂວງ ຫຼື ກອງປະຊຸມຮ່ວມກັບອົງການປົກຄອງແຂວງເພື່ອຄົ້ນຄວ້າປຶກສາຫາລື ແລະ ຊອກຫາທິດທາງວິທີການໃນການແກ້ໄຂ ເພື່ອຮັບປະກັນຄວາມສອດຄ່ອງກັບສະພາບຄວາມເປັນຈິງ;

- ເອົາໃຈໃສ່ເປັນເຈົ້າການໃນການໂຄສະນາເຜີຍແຜ່ມະຕິກອງປະຊຸມຂອງສະພາແຫ່ງຊາດ, ສະພາປະຊາຊົນແຂວງ ກໍຄືບັນດາແນວທາງຕ່າງໆຂອງພັກ-ລັດວາງອອກ, ບັນດາລະບຽບກົດໝາຍ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງໃນເວລາລົງພົບປະຜູ້ມີສິດເລືອກຕັ້ງໃຫ້ຮັບຮູ້ ແລະ ເຂົ້າໃຈ;

- ພົວພັນປະສານງານກັບພາກສ່ວນກ່ຽວຂ້ອງ, ແຕ່ງຕັ້ງຄະນະຮັບຜິດຊອບລົງຕິດຕາມກວດກາຕົວຈິງ ເພື່ອເກັບກຳຂໍ້ມູນ, ໃຫ້ຮູ້ບັນຫາ, ສາເຫດ ແລະ ວິທີການໃນການນຳສະເໜີພາກສ່ວນກ່ຽວຂ້ອງແກ້ໄຂໃຫ້ທັນກັບເວລາ ແລະ ມີປະສິດທິຜົນ;

- ເອົາໃຈໃສ່ ຈັດຕັ້ງຜັນຂະຫຍາຍ ແລະ ປຸກລະດົມປະຊາຊົນບັນດາເຜົ່າພາຍໃນແຂວງຕັ້ງໜ້າປະກອບສ່ວນການພັດທະນາເສດຖະກິດ-ສັງຄົມ ດ້ວຍການປະຕິບັດສິດ ແລະ ພັນທະຂອງພົນລະເມືອງ, ປະຕິບັດບັນດາລະບຽບ, ກົດໝາຍທີ່ວາງອອກ ໃຫ້ມີປະສິດທິຜົນ.

1. ໃນໄລຍະຜ່ານມາ, ສພຂ ກໍຄືແຂວງຂອງທ່ານ ໄດ້ປະຕິບັດໃນການຕິດຕາມກວດກາ 2 ວາລະແຫ່ງຊາດ ມີຜົນໄດ້ຮັບ ຫຼື ຂໍ້ຫຍຸ້ງຍາກແນວໃດ?

ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ-ການເງິນ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ9, ຄະນະປະຈຳສະພາປະຊາຊົນແຂວງ ໄດ້ສົມທົບຮ່ວມກັບອົງການປົກຄອງແຂວງ ໂດຍໄດ້ຈັດຕັ້ງປະຕິບັດຕາມຂໍ້ຕົກລົງ, ແຜນຜັນຂະຫຍາຍຂອງແຂວງ, ຂອງລັດຖະບານ, ໃນສະພາບການທີ່ແຂວງພວກເຮົາ ແລະ ປະເທດຊາດມີຄວາມຫຍຸ້ງຍາກບວກກັບສະພາບຂອງໂລກ ແລະ ພາກພື້ນມີການຜັນແປຢ່າງສັບສົນເຊິ່ງໄດ້ສົ່ງຜົນກະທົບຕໍ່ແຂວງ ແລະ ປະເທດເຮົາທາງກົງ ແລະ ທາງອ້ອມ, ການຂະຫຍາຍຕົວເສດຖະກິດຂອງແຂວງຢູ່ໃນລະດັບ 4,5%; ລວມຍອດຜະລິດຕະພັນພາຍໃນ (GDP) ໃຫ້ບັນລຸໄດ້ 4.883,90 ຕື້ກີບ, ໃນນັ້ນຂົງເຂດກະສິກຳ-ປ່າໄມ້ຂະຫຍາຍຕົວໃນລະດັບ 3,90% ກວມ 35,33%; ຂົງເຂດອຸດສາຫະກຳ-ກໍ່ສ້າງ ຂະຫຍາຍຕົວໃນລະດັບ 4,60% ກວມ 34,10%; ຂົງເຂດບໍລິການຂະຫຍາຍຕົວໃນລະດັບ5%, ກວມ30,57%; ສະເລ່ຍລາຍຮັບຕໍ່ຫົວຄົນໃຫ້ໄດ້ 1.161 ໂດລາ/ຄົນ/ປີ.

ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດບາງດ້ານຍັງເຮັດບໍ່ທັນໄດ້ດີເປັນຕົ້ນແມ່ນ: ການສົ່ງເສີມການຜະລິດເປັນສິນຄ້າທົດແທນການນຳເຂົ້າ ແລະ ສົ່ງອອກ, ການຂຸດຄົ້ນຖານລາຍຮັບທີ່ໝັ້ນຄົງ-ຍາວນານ, ການຈັດເກັບລາຍຮັບ ແລະ ການຄຸ້ມຄອງລາຍຈ່າຍ, ຄຸ້ມຄອງລາຄາສິນຄ້າ-ອັດຕາແລກປ່ຽນ, ການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກສິນຄ້າ ຈຶ່ງເປັນສາເຫດເຮັດໃຫ້ອັດຕາເງິນເຟີ້ຍັງສືບຕໍ່ເພີ່ມຂຶ້ນ, ອັດຕາແລກປ່ຽນມີການປັ່ນປ່ວນຢູ່ເລື້ອຍໆ, ການເກັບລາຍຮັບບໍ່ບັນລຸຕາມແຜນການ, ການຜະລິດພາຍໃນບໍ່ເຂັ້ມແຂງ ແລະ ອື່ນໆ.

ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ: ໄດ້ຈັດຕັ້ງປະຕິບັດບັນດາວຽກງານຈຸດສຸມການແກ້ໄຂບັນຫາຢາເສບຕິດ ຜ່ານການຈັດຕັ້ງປະຕິບັດ ສາມາດແກ້ໄຂບັນຫາຢາເສບຕິດໂດຍລວມຂອງແຂວງຫຼຸດນ້ອຍຖອຍລົງ ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍໄດ້ໂດຍພື້ນຖານ ແລະ ມີໝາກຜົນສຳເລັດຫຼາຍດ້ານ ໂດຍສະເພາະໄດ້ເອົາໃຈໃສ່ຕິດຕາມກວດກາແກ້ໄຂການລັກລອບຄ້າ-ຂາຍຢາເສບຕິດຢູ່ຕາມຊາຍແດນລາວຫວຽດ, ມ້າງຄະດີຄ້າ-ຂາຍຢາເສບຕິດໄດ້ 85 ລາຍ, ກັກຕົວຜູ້ຖືກຫາໄດ້ 120 ຄົນ, ຍິງ 23, ໄດ້ຊຸກຍູ້ສົ່ງເສີມການຜະລິດກະສິກຳເພື່ອທົດແທນການປູກຝິ່ນ, ຝຶກອົບຮົມວິຊາຊີບໃຫ້ແກ່ຜູ້ມາປິ່ນປົວ ແລະ ບຳບັດຢາເສບຕິດຢູ່ສູນບຳບັດ ແລະ ອື່ນໆ, ຄຽງຄູ່ຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນ ຍັງມີບາງດ້ານທີ່ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນເປັນຕົ້ນ: ການໂຄສະນາເຜີຍແຜ່ຜົນຮ້າຍໄພອັນຕະລາຍຂອງຢາເສບຕິດຍັງບໍ່ທັນເລິກເຊິ່ງ, ກວ້າງຂວາງ, ການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ຜູ້ກະທຳຜິດຍັງບໍ່ທັນເຂັ້ມງວດເຮັດໃຫ້ເກີດມີປາກົດການຫຍໍ້ທໍ້ໃນສັງຄົມ.

\+ ທິດທາງຈຸດສຸມແກ້ໄຂບັນຫາດັ່ງກ່າວໃນຕໍ່ໜ້າ

ສືບຕໍ່ຕິດຕາມກວດກາຜົນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດຂອງພາກສ່ວນກ່ຽວຂ້ອງຕາມຄາດໝາຍຂອງອົງການປົກຄອງແຂວງ, ເມືອງໄດ້ກຳນົດໄວ້, ແນ່ໃສ່ແກ້ໄຂບັນຫາຫຍຸ້ງຍາກທາງດ້ານເສດຖະກິດ ເປັນຕົ້ນຊຸກຍູ້ການເກັບລາຍຮັບ, ສົ່ງເສີມການຜະລິດພາຍໃນໃຫ້ເຂັ້ມແຂງ ແລະ ເອົາໃຈໃສ່ຊຸກຍູ້ແກ້ໄຂບັນຫາປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມດ້ວຍການໂຄສະນາເຜີຍແຜ່ຜົນຮ້າຍຂອງຢາເສບຕິດໃນຂົງເຂດສຶກສາປະຊາຊົນບັນດາເຜົ່າທີ່ຢູ່ເຂດຫ່າງໄກສອກຫຼີກ ແລະ ຊຸມຊົນໃນທົ່ວແຂວງ.

ພ້ອມນັ້ນ, ທ່ານຍັງໄດ້ຝາກຄຳຄິດຄຳເຫັນເຖິງພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນແຂວງເວົ້າສະເພາະ ແລະ ເວົ້າລວມກໍຄືປະຊາຊົນບັນດາເຜົ່າໃນທົ່ວປະເທດວ່າ: ຕາງໜ້າຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ຂໍຮຽກຮ້ອງມາຍັງພໍ່ແມ່ປະຊາຊົນບັນດາເຜົ່າທົ່ວປະເທດເວົ້າລວມ, ເວົ້າສະເພາະກໍຄືປະຊາຊົນບັນດາເຜົ່າພາຍໃນແຂວງຊຽງຂວາງ ສືບຕໍ່ໃຫ້ການສະໜັບສະໜູນແລະເປັນເຈົ້າການປະກອບສ່ວນເຂົ້າຮ່ວມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ກໍຄືການຕິດຕາມກວດກາການຈັດຕັ້ງປະຕິບັດພາລະບົດບາດ ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 9, ສະມາຊິກສະພາປະຊາຊົນແຂວງ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້, ພ້ອມກັນນີ້ ຂໍສະເໜີມາຍັງອົງການປົກຄອງແຂວງ, ເມືອງ ແລະ ບັນດາພະແນກການ, ພາກສ່ວນທີ່ກ່ຽວຂ້ອງ ຈົ່ງເພີ່ມທະວີຄວາມເອົາໃຈໃສ່, ເປັນເຈົ້າການຄົ້ນຄວ້າ, ຊອກມາດຕະການ, ວິທີການ ແລະ ການແກ້ໄຂບັນດາປາກົດການຫຍໍ້ທໍ້ຕ່າງໆພາຍໃນແຂວງໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້.

# ຕິດຕາມກວດກາການປະເມີນຈັດຕັ້ງ ປະຕິບັດນິຕິກຳໃຕ້ກົດໝາຍ ຢູ່ເມືອງລ້ອງຊານ



(ສພຂ) ໃນລະຫວ່າງວັນທີ 15-16 ມັງກອນ 2024 ທ່ານ ນາງ ຂັນກາບ ໄຊຍະກຸມມານ ເລຂາທິການສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ແລະ ທ່ານ ລີຈົ້ງ ເກຍເປົາ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຕິດຕາມກວດກາການປະເມີນຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ຢູ່ເມືອງລ້ອງຊານແຂວງໄຊສົມບູນ ເຊິ່ງໄດ້ຮັບການສະໜັບສະໜູນງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPS).

ການເຄື່ອນໄຫວຄັ້ງນີ້ ທ່ານ ສົມຄິດ ເພຍວົງ ຮອງເຈົ້າເມືອງໆລ້ອງຊານ ພ້ອມດ້ວຍຄະນະພັກ, ຄະນະນຳ, ບັນດາຫົວໜ້າຫ້ອງການ, ອົງການ, ກົມກອງອ້ອມຂ້າງເມືອງ ໄດ້ຜັດປ່ຽນກັນຂຶ້ນລາຍງານການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍທີ່ ສພຂ ໄຊສົມບູນ ໄດ້ຮັບຮອງ ແລະປະກາດນຳໃຊ້ຢູ່ພາຍໃນ 5 ເມືອງທົ່ວແຂວງໄຊສົມບູນ. ການລາຍງານດັ່ງກ່າວ ແມ່ນໄດ້ເນັ້ນໜັກກ່ຽວກັບດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ດ້ານແຮງງານສະຫວັດດີການ ແລະ ສັງຄົມ.

ຈາກນັ້ນ, ຄະນະໄດ້ສືບຕໍ່ລົງເຮັດວຽກຮ່ວມກັບ ບ້ານວັງຫຼວງ, ເຂດ 516 ບ້ານໂພນສະອາດ ແລະ ບ້ານນາມອນ ໂດຍແຕ່ລະກຸ່ມບ້ານມີອົງການປົກຄອງບ້ານ, ຄະນະນາຍບ້ານ, ແນວໂຮມບ້ານ, ປກຊ-ປກສບ້ານ, ຄະນະແມ່ຍິງບ້ານ ແລະ ຄະນະຊາວໜຸ່ມບ້ານ ໄດ້ລາຍງານຜົນການຈັດຕັ້ງຂັ້ນບ້ານ, ແບບວິຖີການດຳລົງຊີວິດ, ການທຳມາຫາກິນຂອງແຕ່ບ້ານລະແມ່ນມີຄວາມແຕກຕ່າງກັນໄປໂດຍສິ້ນເຊີງ ແລະ ໃນປັດຈຸບັນ ລະບົບເງິນເຟີ້ ເຮັດໃຫ້ພໍ່ແມ່ປະຊາຊົນຜູ້ບໍ່ມີທຸລະກິດແມ່ນຫາກິນລຳບາກຍາກຂຶ້ນທຸກມື້ ແລະ ດ້ວຍເຫດນີ້ ຈຶ່ງເປັນການແບ່ງປັນວິຖີຊີວິດແລະເປັນການປຶກສາຫາລືຫາທາງອອກກັນລະຫວ່າງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18 ແລະ ສະມາຊິກສະພາປະຊາຊົນແຂວງ.

**(ນາງ ອຳໄພພອນ ແກ້ວວິໄລ)**

# ມອບ-ຮັບ ເງິນຊ່ວຍເຫຼືອຕໍ່ໄຟຟ້າ ເຂົ້າໂຮງຮຽນປະຖົມບ້ານຕະເຄິງ




(ສພຊ) ວັນທີ 17 ມັງກອນ2024 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຫຼວງນ້ຳທາ ກຸ່ມບໍລິບໍລິສັດສີມອນ ພັດທະນາກະສິກຳແລະບໍລິການຂາເຂົ້າ-ຂາອອກ ຈຳກັດ ໄດ້ມອບເງິນໃຫ້ສະພາປະຊາຊົນແຂວງ ຈຳນວນ 15.000.000 ກີບ (ສິບຫ້າລ້ານກີບ) ເພື່ອນຳໄປຊ່ວຍເຫຼືອຕໍ່ໄຟຟ້າເຂົ້າໂຮງຮຽນປະຖົມບ້ານຕະເຄິງ ເມືອງນາແລ ແຂວງຫຼວງນ້ຳທາ

ໂດຍການກ່າວມອບຂອງທ່ານ ນາງ ສີມອນ ແກ້ວວົງເພັດ ປະທານ ຜູ້ບໍລິຫານກຸ່ມບໍລິສັດສີມອນ ພັດທະນາກະສິກຳ ແລະ ບໍລິການຂາເຂົ້າ-ຂາອອກ ຈຳກັດແລະກ່າວຮັບໂດຍທ່ານ ຄຳຟອງ ອິນມະນີ ປະທານສະພາປະຊາຊົນແຂວງ ເຊິ່ງທ່ານກໍໄດ້ກ່າວສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນມາຍັງກຸ່ມບໍລິບໍລິສັດສີມອນ ພັດທະນາກະສິກຳ ແລະ ບໍລິການຂາເຂົ້າ-ຂາອອກ ຈຳກັດ ທີ່ໃຫ້ການຊ່ວຍເຫຼືອໂຮງຮຽນປະຖົມບ້ານຕະເຄິງ ເມືອງນາແລ ໃນຄັ້ງນີ້ ແລະ ຈະນຳເອົາເງິນຈຳນວນດັ່ງກ່າວມອບໃຫ້ໂຮງຮຽນ ເພື່ອໝູນໃຊ້ເຂົ້າໃນວຽກງານທີ່ຈຳເປັນໃຫ້ເກີດປະໂຫຍດສູງສຸດ.

# ກອງປະຊຸມປະຈຳປີ 2023 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ




(ສພຊ) ວັນທີ 12 ມັງກອນ 2024 ທີ່ສະໂມສອນແຂວງອຸດົມໄຊ,ກອງປະຊຸມປະຈຳປີ 2023 ຂອງຄະນະສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ4 ແຂວງອຸດົມໄຊ ໄດ້ໄຂຂຶ້ນຢ່າງເປັນທາງການ, ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ IX ປະຈຳເຂດເລືອກຕັ້ງທີ4 ແຂວງອຸດົມໄຊ,ເຂົ້າຮ່ວມກອງປະຊຸມຄັ້ງນີ້ມີທ່ານ ບຸນຄົງ ຫຼ້າຈຽມພອນ ເຈົ້າແຂວງອຸດົມໄຊ, ມີບັນດາທ່ານຄະນະປະຈຳພັກແຂວງ, ຫົວໜ້າພະແນກ-ຮອງພະແນກ, ສະມາຊິກສະພາແຫ່ງຊາດ,ສະມາຊິກສະພາປະຊາຊົນແຂວງ, ແຂກເຊີນ ແລະ ພະນັກງານວິຊາການຂະແໜງກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການຜ່ານຮ່າງບົດລາຍງານການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 4 ແຂວງອຸດົມໄຊ ປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024 ເພື່ອເປັນການສະຫຼຸບຕີລາຄາຄືນກ່ຽວກັບຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 4 ແຂວງອຸດົມໄຊ. ຈາກນັ້ນ, ບັນດາທ່ານຜູ້ແທນກອງປະຊຸມໄດ້ພ້ອມກັນຄົ້ນຄວ້າພິຈາລະນາ, ປະກອບຄຳເຫັນໃສ່ຮ່າງບົດລາຍງານດັ່ງກ່າວຢ່າງມີຈຸດສຸມແລະກົງໄປກົງມາ ເພື່ອເຮັດໃຫ້ເນື້ອໃນຄົບຖ້ວນ, ສົມບູນ ແລະ ສອດຄ່ອງກັບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ພ້ອມນັ້ນ, ກອງປະຊຸມຍັງໄດ້ຮັບຟັງການເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ07/ຄປຈ, ລົງວັນທີ 9 ມັງກອນ 2023 ວ່າດ້ວຍການຮັບ ແລະ ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳ.

**(ນັກຂ່າວ ສພຊ)**

# ແຂວງວຽງຈັນ ປາຖະກະຖາ 2 ວັນສຳຄັນປະຫວັດສາດ




(ສພຊ) ວັນທີ 16 ມັງກອນ 2024 ຢູ່ຫ້ອງປະຊຸມສະພາປະຊາຊົນແຂວງວຽງຈັນ ໄດ້ຈັດພິທີປາຖະກະຖາ 2 ວັນສຳຄັນຄື: ວັນຄ້າຍວັນເກີດຂອງທ່ານປະທານຄຳໄຕສີພັນດອນ ຄົບຮອບ 100 ປີ (8/2/1924-8/2/2024) ແລະ ວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 75 ປີ (20/1/1949-20/1/2024) ພາຍໃຕ້ການເປັນປະທານຮ່ວມຂອງ ທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງ (ສພຂ) ວຽງຈັນ ແລະ ທ່ານ ພັອ ສົມພັນ ເຮືອງພະຈັນ ຫົວໜ້າຫ້ອງການເມືອງທະຫານແຂວງວຽງຈັນ, ເຂົ້າຮ່ວມມີຮອງປະທານ ສພຂ, ຄະນະກຳມະການ, ຮອງເລຂາທິການ,ຫົວໜ້າ-ຮອງຫົວໜ້າຂະແໜງ, ສະມາຊິກພັກ, ພະນັກງານພາຍໃນ ສພຂ.

ໃນພິທີດັ່ງກ່າວ ທ່ານ ບຸນສອນ ເພັດລາວັນ ໄດ້ຍົກໃຫ້ເຫັນວ່າ: ປະທານ ຄຳໄຕ ສີພັນດອນ ແມ່ນໜຶ່ງໃນບັນດາຜູ້ນຳຮຸ່ນທຳອິດຂອງການປະຕິວັດລາວ ໄດ້ຮ່ວມກັບຜູ້ນຳຄົນອື່ນໆ ນຳພາພາລະກິດການຕໍ່ສູ້ປົດປ່ອຍປະເທດຊາດອອກຈາກແອກປົກຄອງຂອງຈັກກະພັດຕ່າງດ້າວ ກໍຄືພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ເພິ່ນເປັນຜູ້ນຳທີ່ມີນ້ຳໃຈຮັກຊາດອັນສູງສົ່ງ, ເສຍສະຫຼະທຸກສິ່ງທຸກຢ່າງ ອຸທິດສະຕິປັນຍາ ແລະ ກຳລັງວັງຊາຢ່າງບໍ່ຮູ້ອິດຮູ້ເມື່ອຍຄຽງບ່າຄຽງໄຫຼ່ກັບປະທານ ໄກສອນ ພົມວິຫານ ແລະ ຜູ້ນຳຄົນອື່ນໆ ຈັດຕັ້ງນຳພາຂະບວນການປະຕິວັດໄດ້ເຕີບໃຫຍ່ຂະຫຍາຍຕົວ ແລະ ຍາດໄດ້ໄຊຊະນະຢ່າງຕໍ່ເນື່ອງ ແລະ ຍາດໄດ້ຜົນສຳເລັດຢ່າງມີໄຊ, ນຳພາປະເທດຊາດກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມເທື່ອລະກ້າວຢ່າງໜັກແໜ້ນ, ປະທານຄຳໄຕ ສີພັນດອນ ຍາມໃດກໍໄດ້ຮັບຄວາມນັບຖືຮັກແພງ ແລະ ເຊື່ອໝັ້ນໄວ້ວາງໃຈຈາກໝູ່ຄະນະ ກໍຄືພະນັກງານນັກຮົບ ແລະ ປະຊາຊົນລາວບັນດາເຜົ່າ, ປະທານ ຄຳໄຕ ສີພັນດອນ ໄດ້ຮັບມອບໝາຍຫຼາຍໜ້າທີ່ສຳຄັນເປັນລຳດັບມາ ຈາກຜູ້ແທນລັດຖະບານລາວອິດສະຫຼະປະຈຳເຂດໃຕ້ລາວ, ເປັນປະທານຄະນະກຳມະການຕໍ່ຕ້ານເຂດກາງ, ເປັນກຳມະການສູງກາງແນວລາວອິດສະຫຼະ ແລະ ແນວລາວຮັກຊາດ, ເປັນກຳມະການສູນ

ອ່ານຕໍ່ໜ້າ 8

# ໜ່ວຍພັກ ສພຂ ແຂວງຄຳມ່ວນ ປະເມີນໜ່ວຍພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ

(ສພຊ) ໃນວັນທີ 18 ມັງກອນ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຄຳມ່ວນ ໄດ້ສຳເລັດກອງປະຊຸມບັ້ນດຳເນີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2023 ໂດຍການເປັນປະທານຂອງສະຫາຍ ຄຳສຸກ ວັນທະວົງສາ ເລຂາໜ່ວຍພັກສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ເຂົ້າຮ່ວມມີສະຫາຍ ບຸນມີ ພົມມະສອນ ຮອງເລຂາພັກແຂວງ, ປະທານ ສພຂ, ມີບັນດາຮອງປະທານ ສພຂ, ຄະນະຈັດຕັ້ງແຂວງ, ຄະນະກວດກາພັກ-ລັດແຂວງ, ຄະນະໜ່ວຍພັກ, ສະມາຊິກພັກ ເຂົ້າຮ່ວມທັງໝົດ 38 ສະຫາຍ, 13 ຍິງ ສະຫາຍ.

ກອງປະຊຸມໄດ້ຮັບຟັງການຜ່ານໃບສຳຫຼວດ, ຕີລາຄາການຊີ້ນຳ-ນຳພາຂອງຄະນະພັກ, ສະມາຊິກພັກ, ພ້ອມທັງປະກອບຄຳເຫັນ, ຕີລາຄາຄຸນນະພາບ, ແບ່ງປະເພດຕົນເອງ ແລະ ສະມາຊິກພັກພາຍໃນໜ່ວຍ ຕາມ 5 ມາດຖານ ທີ່ກຳນົດໃນໃບສຳຫຼວດຂອງບຸກຄົນ ຕໍ່ການປະຕິບັດໜ້າທີ່ການເມືອງຄື: ດ້ານການເມືອງ-ແນວຄິດ, ດ້ານສະຕິການຈັດຕັ້ງ ແລະ ລະບຽບວິໄນພາຍໃນພັກ, ດ້ານແບບແຜນການນຳພາ ແລະ ວິທີເຮັດວຽກ, ດ້ານຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ ແລະ ໄປພ້ອມກັບການສຳຫຼວດ, ຕີລາຄາຈັດປະເພດຂອງສະມາຊິກພັກ, ຄະນະພັກ ແລະ ໜ່ວຍພັກ ຫຼັງຈາກນັ້ນ, ຄະນະໜ່ວຍພັກກໍຜ່ານຮ່າງບົດສະຫຼຸບກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2023 ແລະ ທິດທາງແຜນການຄາດໝາຍສູ່ຊົນປີ 2024.

ໃນຕອນທ້າຍກອງປະຊຸມ ສະຫາຍ ບຸນມີ ພົມມະສອນ ຍັງມີຄຳເຫັນໂອ້ລົມ ແລະ ໃຫ້ທິດຊີ້ນຳຕໍ່ສະມາຊິກພັກທຸກສະຫາຍໃຫ້ເອົາໃຈໃສ່ໃນວຽກງານຊີວິດການເມືອງ, ວິຊາສະເພາະ, ແກ້ໄຂຈຸດອ່ອນຂອງຕົນເອງ ແລະ ໝູ່ຄະນະສ່ອງແສງເພື່ອສົ່ງເສີມ ແລະ ແກ້ໄຂໃຫ້ມີບາດກ້າວໃໝ່ໃຫ້ດີກວ່າເກົ່າ, ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານ, ຜັນຂະຫຍາຍມະຕິຕ່າງໆ ທີ່ໄດ້ຮັບມອບໝາຍໃຫ້ສຳເລັດເພື່ອຮັກສາໃຫ້ໄດ້ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

**(ເອື້ອ ມະໂນສິງ)**






## ສົ່ງເສີມ...

(ຕໍ່ຈາກໜ້າ 1)

ກອງປະຊຸມໄດ້ຕ້ອນຮັບ ແລະ ກ່າວໄຂກອງປະຊຸມໂດຍ ທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ເຊິ່ງທ່ານໄດ້ກ່າວວ່າ: ຂ້າພະເຈົ້າ ຕີລາຄາສູງທີ່ບັນດາປະເທດອາຊຽນໄດ້ມີການສົ່ງເສີມການມີສ່ວນຮ່ວມຂອງເພດຍິງໃນລັດຖະສະພາ ແລະ ການເປັນຜູ້ນຳຂອງເພດຍິງໃນຕຳແໜ່ງທີ່ສຳຄັນຕ່າງໆ ແລະ ມີອັດຕາສ່ວນເພີ່ມຂຶ້ນ ໂດຍເຫັນໄດ້ຈາກອັດຕາສ່ວນຂອງເພດຍິງໃນລັດຖະສະພາຂອງບັນດາປະເທດອາຊຽນໄດ້ເພີ່ມຂຶ້ນຈາກ 12% (ໃນປີ 2000) ເປັນ 23% (ໃນປີ 2023). ບັນດາປະເທດອາຊຽນ ກໍຄື ສປປ ລາວ ໄດ້ໃຫ້ຄວາມສຳຄັນຕໍ່ການສົ່ງເສີມ ແລະ ການພັດທະນາຄວາມສະເໝີພາບລະຫວ່າງຍິງ-ຊາຍ ເຊິ່ງບັນດາປະເທດພວກເຮົາໄດ້ເປັນພາຄີຂອງສົນທິສັນຍາວ່າດ້ວຍສິດທິມະນຸດ, ສົນທິສັນຍາວ່າດ້ວຍການລົບລ້າງທຸກການຈຳແນກຕໍ່ແມ່ຍິງ (CEDAW), ສົນທິສັນຍາວ່າດ້ວຍສິດທິທາງການເມືອງ ແລະ ສິດຂອງພົນລະເມືອງ (ICCPR). ໃນຂອບອາຊຽນ ພວກເຮົາໄດ້ມີຖະແຫຼງການຮ່ວມວ່າດ້ວຍການສົ່ງເສີມແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງໃນອາຊຽນ; ຖະແຫຼງການອາຊຽນວ່າດ້ວຍຄວາມສະເໝີພາບຍິງ-ຊາຍ ແລະ ການພັດທະນາຄອບຄົວ; ຖະແຫຼງການອາຊຽນວ່າດ້ວຍການເອົາໃຈໃສ່ບັນດາບົດບາດຍິງ-ຊາຍ ໃນການຈັດຕັ້ງປະຕິບັດວິໄສທັດ 2025 ຂອງປະຊາຄົມອາຊຽນ ແລະ ການພັດທະນາແບບຍືນຍົງ. ໃນຂອບລັດຖະສະພາ, ແຕ່ລະປີ ພວກເຮົາໄດ້ມີກອງປະຊຸມເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດບັນດາມະຕິ, ຖະແຫຼງການທີ່ໄດ້ວາງອອກ ແນໃສ່ເຮັດໃຫ້ແມ່ຍິງມີສ່ວນຮ່ວມແລະມີບົດບາດທາງດ້ານການເມືອງນັບມື້ນັບສູງຂຶ້ນ.

ກອງປະຊຸມຈະໄດ້ລວມເອົາບັນດາສະມາຊິກລັດຖະສະພາມາເຕົ້າໂຮມກັນ ເພື່ອຊອກຫາວິທີທາງແກ້ໄຂໃນກອງປະຊຸມເວທີຜູ້ນຳທາງການເມືອງຂອງເພດຍິງ; ເປົ້າໝາຍແມ່ນເພື່ອສ້າງຄວາມເຂັ້ມແຂງການມີສ່ວນຮ່ວມຂອງເພດຍິງໃນດ້ານການເມືອງ ແລະ ການເປັນຜູ້ນຳ, ການເຊື່ອມໂຍງເຂົ້າກັບພາກພື້ນ ໂດຍການເພີ່ມທະວີການຮ່ວມມືໃນທົ່ວພາກພື້ນ, ຂໍ້ລິເລີ່ມນີ້ ສອດຄ່ອງກັນກັບຫົວຂໍ້ລວມຂອງສະພາແຫ່ງຊາດລາວໃນນາມເປັນປະທານ AIPA.

ຫົວຂໍ້ຍ່ອຍທີ່ໄດ້ຮັບການຄົ້ນຄວ້າໂດຍຜ່ານກອງປະຊຸມເວທີຜູ້ນຳທາງການເມືອງຂອງເພດຍິງລວມມີ: ສົ່ງເສີມການມີສ່ວນຮ່ວມຂອງເພດຍິງທາງດ້ານການເມືອງ, ຄວາມເປັນຜູ້ນຳຂອງເພດຍິງໃນການສົ່ງເສີມຄວາມເຂັ້ມແຂງ ແລະ ຮັກສາສັນຕິພາບແບບຍືນຍົງ;

ສົ່ງເສີມການເຊື່ອມຕໍ່ ແລະ ການຮ່ວມມືລະຫວ່າງຮຸ່ນຄົນຕໍ່ຮຸ່ນຄົນຂອງຜູ້ນຳເພດຍິງ.

**(ກິງທະນູຄຳ ພີພັດເສລີ)**




## ຍົກລະດັບ...

(ຕໍ່ຈາກໜ້າ 1)

ກອງປະຊຸມໄດ້ຮັບຟັງການສະເໜີ, ເຜີຍແຜ່ ແລະ ພ້ອມກັນຄົ້ນຄວ້າ, ປະກອບຄວາມເຫັນໃສ່ບັນດາເນື້ອໃນ 9 ເອກະສານສຳຄັນຄື: ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ; ປຶ້ມຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ; ບົດຮຽນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ; ບົດຮຽນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຂົງເຂດຍຸຕິທຳ; ບົດຮຽນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 3 ສະບັບ ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການໂຄສະນາເຜີຍ ແຜ່ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງສະພາແຫ່ງຊາດ; ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕີຄວາມໝາຍ ແລະ ອະທິບາຍກົດໝາຍ; ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການຜັນຂະຫຍາຍມາດຕາຂອງກົດໝາຍທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ; ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ວຽກງານຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍເປັນການຈັດຕັ້ງປະຕິບັດຕາມມາດຕາ 124 ແລະ 125 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ, ມາດຕາ 13 ຂອງກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອຕີລາຄາ ແລະ ປະເມີນປະສິດທິພາບ ແລະ ປະສິດທິຜົນຂອງການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດຕ່າງໆ ແນໃສ່ປັບປຸງແກ້ໄຂບັນຫາທີ່ບໍ່ສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ, ເປັນຊ່ອງວ່າງ, ມີຜົນກະທົບ ແລະ ບໍ່ສາມາດຈັດຕັ້ງປະຕິບັດໄດ້ ໂດຍມີເນື້ອໃນພື້ນຖານ 5 ດ້ານເປັນບ່ອນອີງໃນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຄື: (1) ການໂຄສະນາເຜີຍແຜ່ ແລະ ຍົກສູງສະຕິເຄົາລົບກົດໝາຍ; (2) ການສ້າງ ຫຼື ປັບປຸງກົນໄກການຈັດຕັ້ງປະຕິບັດກົດໝາຍ ລວມທັງການຜັນຂະຫຍາຍກົດໝາຍເປັນອັນລະອຽດ; (3) ການເຝິກອົບຮົມ, ຍົກລະດັບຄວາມຮູ້, ຄວາມສາມາດຂອງພະນັກງານ-ລັດຖະກອນທີ່ຮັບຜິດຊອບຈັດຕັ້ງປະຕິບັດກົດໝາຍ; (4) ການກວດກາກົດໝາຍທີ່ຂັດກັນ, ເປັນຊ່ອງວ່າງ, ມີຜົນກະທົບ ຫຼື ສາເຫດທີ່ພາໃຫ້ບໍ່ສາມາດຈັດຕັ້ງປະຕິບັດກົດໝາຍໄດ້ ແລະ (5) ການສະໜອງຂໍ້ມູນຂ່າວສານ ແລະ ການບໍລິຫານຈັດການເພື່ອອຳນວຍຄວາມສະດວກ ແລະ ການສະໜອງການບໍລິການປະຊາຊົນ.

ວຽກງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຍັງເປັນວຽກງານໃໝ່ຂອງຄະນະປະຈຳສະພາແຫ່ງຊາດ ຈຶ່ງມີຄວາມຈຳເປັນຕ້ອງໄດ້ເຝິກອົບຮົມໃຫ້ແກ່ພະນັກງານ-ລັດຖະກອນຫຼັກແຫຼ່ງທີ່ເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ເພື່ອໃຫ້ມີຄວາມເຂົ້າໃຈ, ມີຄວາມຊຳນານ ແລະ ທັນເປັນມືອາຊີບໃນຕໍ່ໜ້າ; ເພື່ອເປັນບົດຮຽນໃນການປັບປຸງແກ້ໄຂບັນຫາທີ່ຍັງເຫັນວ່າບໍ່ທັນສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມແຕ່ລະໄລຍະ, ຄວາມບໍ່ສອດຄ່ອງຂອງນິຕິກຳທີ່ເປັນຊ່ອງວ່າງ ຫຼື ບໍ່ສາມາດຈັດຕັ້ງປະຕິບັດໄດ້ ເຊິ່ງພາໃຫ້ມີຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນໃນສັງຄົມ ໃຫ້ໄດ້ຮັບການປັບປຸງແກ້ໄຂໃຫ້ດີຂຶ້ນກວ່າເກົ່າແນໃສ່ຍົກສູງຄຸນນະພາບໃນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ໃນການຄົ້ນຄວ້າວຽກງານດັ່ງກ່າວໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ຮັບປະກັນຄວາມຖືກຕ້ອງຕາມກົດໝາຍເທື່ອລະກ້າວ ທັງເປັນການປະກອບສ່ວນສຳຄັນໃຫ້ແກ່ການຫັນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ໃຫ້ເປັນໄປຕາມກົດໝາຍເທື່ອລະກ້າວຕາມແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກເຮົາ.

ທ່ານຮອງປະທານສະພາແຫ່ງຊາດຍັງໄດ້ຮຽກຮ້ອງບັນດາສຳມະນາກອນ ຈົ່ງຕັ້ງໜ້າຮັບຟັງ ແລະ ປະກອບຄວາມເຫັນຕໍ່ເນື້ອໃນຕ່າງໆທີ່ນຳມາປຶກສາໃນກອງປະຊຸມຄັ້ງນີ້ ໃຫ້ພາວະວິໄສ, ຕົວຈິງ ແລະ ເລິກເຊິ່ງເຮັດໃຫ້ກອງປະຊຸມບັນລຸຜົນສຳເລັດຕາມຈຸດປະສົງຄາດໝາຍທີ່ວາງໄວ້.

ກອງປະຊຸມຄັ້ງນີ້ ໄດ້ດຳເນີນໄປຮອດວັນທີ 9 ກຸມພາ ຈຶ່ງສຳເລັດລົງ ເຊິ່ງມີທ່ານຮອງປະທານກຳມາທິການກົດໝາຍ ພ້ອມດ້ວຍຄະນະກົມ ແລະ ພະນັກງານຂອງກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ ແລະ ບັນດາກົມພາຍໃນສະພາແຫ່ງຊາດອີກ 10 ກົມ ເຂົ້າຮ່ວມ; ໂດຍໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານ ສົມທົບຈາກມູນນິທິເວດມິນສະເຕີ ເພື່ອປະຊາທິປະໄຕ (Westminster Foundation for Democracy).

**(ນາງ ຕາດຳ ທ່ານຝ້າ)**

## ແຂວງວຽງຈັນ...

(ຕໍ່ຈາກໜ້າ 7)

ກາງພັກ, ໄດ້ຮັບການປະດັບຊັ້ນພົນເອກ ແລະ ຜູ້ບັນຊາການສູງສຸດກອງທັບປົດປ່ອຍປະຊາຊົນລາວ ແລະ ເປັນກຳມະການກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ, ເປັນຮອງນາຍົກລັດຖະມົນຕີ, ເປັນລັດຖະມົນຕີກະຊວງປ້ອງກັນປະເທດ, ເປັນນາຍົກລັດຖະມົນຕີ ແລະ ເປັນຜູ້ນຳສູງສຸດຂອງພັກ ແລະ ລັດເຮົາ.

ພ້ອມນັ້ນ, ໄດ້ຮັບຟັງປາຖະກະຖາມູນເຊື້ອວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 75 ປີ ຈາກທ່ານ ພັອ. ສົມພົນ ເຮືອງພະຈັນ ວ່າ: ຊາດລາວແມ່ນຊາດໜຶ່ງ ທີ່ມີປະຫວັດສາດອັນຍາວນານນັບຫຼາຍພັນປີ, ປະຊາຊົນລາວບັນດາເຜົ່າມີນ້ຳໃຈຮັກຊາດອັນດູດດື່ມ, ມີຄວາມສາມັກຄີເປັນປຶກແຜ່ນ, ມີຄວາມດຸໝັ່ນຂະຫຍັນພຽນ ແລະ ມູນເຊື້ອພິລະອາດຫານຕໍ່ສູ້ບໍ່ຍອມຈຳນົນສັດຕູ ເພື່ອປົກປັກຮັກສາຄວາມເປັນເອກະລາດ ແລະ ອິດສະຫຼະພາບແຫ່ງຊາດໄວ້ໃຫ້ໝັ້ນຄົງ. ກອງທັບປະຊາຊົນລາວສ້າງຕັ້ງ 20 ມັງກອນ 1949 ຢູ່ເຂດທີ່ໝັ້ນຖ້ຳແມ ເຂດລາວຮຸ່ງພຽງສາ ເມືອງຊຽງຄໍ້ ແຂວງຫົວພັນ. ທ່ານ ໄກສອນ ພົມວິຫານ ໄດ້ປະກາດສ້າງຕັ້ງ “ກອງລາດຊະວົງ” ຂຶ້ນຢ່າງເປັນທາງການ, ນັບຕັ້ງແຕ່ນັ້ນມາ ວັນດັ່ງກ່າວຈຶ່ງກາຍເປັນວັນປະຫວັດສາດແຫ່ງການສ້າງຕັ້ງກອງທັບປະຊາຊົນລາວ. ທາດແທ້ ແລະ ມູນເຊື້ອອັນສະຫງ່າອົງອາດ ຂອງກອງທັບປະຊາຊົນລາວ, ທາດແທ້ຂອງຊົນຊັ້ນກຳມະກອນ, ທາດແທ້ປະຕິວັດ, ທາດແທ້ປະຊາຊົນ ຍ້ອນກອງທັບປະຊາຊົນລາວ ແມ່ນກຳເນີດມາຈາກປະຊາຊົນ, ໂດຍປະຊາຊົນ ຕໍ່ສູ້ເພື່ອຄວາມສົມບູນພູນສຸກຂອງປະຊາຊົນລາວບັນດາເຜົ່າ. ມູນເຊື້ອອັນສະຫງ່າຂອງກອງທັບປະຊາຊົນລາວ ແມ່ນມູນເຊື້ອຈົງຮັກພັກດີຕໍ່ພັກ, ຕໍ່ປະຊາຊົນ, ຕໍ່ອຸດົມການສັງຄົມນິຍົມ, ມູນເຊື້ອນ້ຳໃຈຕໍ່ສູ້ພິລະອາຫານ, ກ້າແກ່ນ, ໜຽວແໜ້ນ ແລະ ມີໄຫວພິບ, ມູນເຊື້ອນ້ຳໃຈດຸໝັ່ນຂະຫຍັນພຽນ, ອອກແຮງງານເພີ່ມພູນຜະລິດຜົນ ແລະ ປະຢັດມັດທະຍັດ, ມູນເຊື້ອ ຍຶດໝັ້ນການຜົວພັນ, ສາມັກຄີແບບກາຍອິນຊີອັນແໜ້ນແຟ້ນກັບປະຊາຊົນບັນດາເຜົ່າ, ມູນເຊື້ອຜົວພັນຮ່ວມມືພາຍໃນ ແລະ ສາກົນຢ່າງກົມກຽວ ບົນພື້ນຖານຕ່າງຝ່າຍມີຜົນປະໂຫຍດ; ກອງທັບປະຊາຊົນເວລາໃດກໍຮັກສາມູນເຊື້ອອັນດີງາມ, ພາຍໃນມີປະຊາທິປະໄຕ ແລະ ມີລະບຽບວິໄນເຂັ້ມງວດ ແລະ ວຽກງານອື່ນໆ.






# ສັດທາ ກັບ ປັນຍາ ມີຄ່າ ແລະ ລາຄາຕ່າງກັນ

# ດັ້ນກົບເມກ

ຜູ້ຂຽນຢາກໃຫ້ຜູ້ອ່ານພິຈາລະນາສັງເກດນຳກັນວ່າ ຫຼາຍຄັ້ງທີ່ເກີດເລື່ອງຂຶ້ນລະຫວ່າງວັດກັບບ້ານ ຫຼື ລະຫວ່າງ ພະສົງກັບສີກາ (ແມ່ອອກ) ແມ່ນພາໃຫ້ບາງຄົນເວົ້າວ່າ: ເສື່ອມສັດທາ ແຕ່ຢ່າລືມວ່າ ການສູນເສຍສັດທາໄປແລ້ວ ປັນຍາຈຶ່ງເກີດຕາມຫຼັງ-ຫຼາຍຄົນຫັນມາສົນທະນາ,ຄົ້ນຄິດວ່າເປັນຫຍັງຈຶ່ງເກີດເລື່ອງແບບນັ້ນຂຶ້ນ? ຊາວພຸດບາງຄົນຫຼົງຕິດພະສົງບາງອົງ (ເຮັດໂຕເຂັ້ມຂັງສັກສິດ...)ຈົນຫູຕາມືດບອດເບິ່ງບໍ່ເຫັນພະທຳ ທີ່ເປັນຄຳສອນໂຕຈິງ ແກ້ບັນຫາຊີວິດ-ຊີ້ທາງເດີນໃຫ້ຊີວິດ ຢ່າລືມວ່າ ພະສົງເຄົາລົບພະພຸດທະເຈົ້າສ່ວນພະພຸດທະເຈົ້າ ກໍເຄົາລົບພະທຳ. ດັ່ງນັ້ນ, ພະທຳ ຈຶ່ງເປັນສິ່ງສູງສຸດທີ່ຕ້ອງສຶກສາໃຫ້ເຂົ້າໃຈ-ນຳໄປປະຕິບັດ ແຕ່ຊາວພຸດທີ່ມີແຕ່ສັດທາພຽງແຕ່ເຄົາລົບໃນພະສົງບາງອົງ-ຫຼົງຕິດໃນພະສົງບາງບ່ອນບາງແຫ່ງ ຈົນເວົ້າອວດກັນວ່າ ອາຈານຂ້ອຍຄັກກວ່າ ສັກສິດກວ່າອາຈານເຈົ້າ;ບາງຄົນຫຼົງເຊື່ອຖືພະສົງຈົນເລີຍຄວາມເໝາະສົມ ເພາະຜູ້ຂຽນໄດ້ຍິນຝ່າຍຜົວຈົ່ມວ່າ: ມື້ກ່ອນເມຍເຮົາໄປເຮັດບຸນຢູ່ວັດ ມີພິທີຫົດສົງພະ ແລະ ເມຍເຮົາກໍໄດ້ຈົກກະເປົາເງິນຍີ່ຫໍ້ດັງລາຄາແພງມາໃຫ້ພະສົງຢ່າງປຽບເພາະເຊື່ອ... ລາວເວົ້າຕໍ່ວ່າ ຖ້າພະສົງປຽບກະເປົາເງິນແລ້ວລວຍຂຶ້ນ ເຮົາຊິເຊື່ອຢູ່ ເມຍເຮົາກະໂພດໄປວ່າຊັ້ນ!

ດັ່ງນັ້ນ ສິ່ງທີ່ຊາວພຸດຕ້ອງເຂົ້າໃຫ້ເຖິງຄືພະທຳ-ຄືທຳມະຄຳສອນ ຄືໂຕປັນຍາ ຖ້າວ່າຊາວພຸດຮູ້ພະທຳແຈ້ງ-ເລິກເຊິ່ງ ກໍສາມາດຮູ້ໄດ້ວ່າ ພະສົງອົງໃດມີປັນຍາ, ພະສົງອົງໃດປະພຶດຖືກຕ້ອງຕາມທຳວິໄນ, ພະສົງອົງໃດເປັນພະແທ້ພະທຽມ.

ສັງລວມວ່າ ຖ້າຊາວພຸດຫຼົງເຄົາລົບສັດທາແຕ່ໃນພະສົງ ຈົນເບິ່ງບໍ່ເຫັນພະທຳແລ້ວ ຈະເກີດປັນຍາໄດ້ແນວໃດ?

ພະສົງເອງບັງພະທຳ, ບັງພະພຸດທະເຈົ້າຜູ້ເຊື່ອຖືຈຶ່ງເບິ່ງບໍ່ເຫັນ ແກ່ນສັດຈະທຳ, ຄ່າ ແລະ ລາຄາ ສັດທາ ແລະ ປັນຍາຈຶ່ງຕ່າງກັນ ຖ້າວ່າມີເລື່ອງບໍ່ດີເກີດຂຶ້ນລະຫວ່າງພະສົງ ແລະ ສີກາ ຫຼື ພະສົງປະພຶດນອກທຳວິໄນແລ້ວ ເຮັດໃຫ້ຫູຕາຊາວບ້ານສະຫວ່າງຂຶ້ນເກີດປັນຍາຕາມມາກໍກຸ້ມຄ່າຢູ່ດອກ.






# ສະຕິ - ປັນຍາ

'ສະຕິ' ເປັນຄຳນາມຈາກເຄົ້າປາລີ Sati ໝາຍເຖິງ “ຄວາມຮູ້ສຶກ, ຄວາມຮູ້ສຶກຕົວ” ເຊັ່ນ

- ລາວຟື້ນຄືນສະຕິ ພາຍຫຼັງສະຫຼົບໄປຫຼາຍຊົ່ວໂມງ.
- ພາຍຫຼັງຖືກກະທົບຢ່າງແຮງ ລາວກໍໝົດສະຕິ.
- ສຽງຮ້ອງຂອງຜູ້ໂດຍສານ ເຮັດໃຫ້ຄົນຂັບລົດໄດ້ສະຕິ ຟ້າວຫັນພວງມາໄລລົດກັບຄືນສູ່ເສັ້ນທາງ ບໍ່ຊັ້ນມີຫວັງໄດ້ລົງໄປຮ່ອງນ້ຳຄັກໆ.

'ສະຕິ' ຍັງໝາຍເຖິງ “ຄວາມຮູ້ສຶກຜິດຖືກ, ຄວາມຮູ້ສຶກຮັບຜິດຊອບ” ເຊັ່ນ

- ລາວເປັນສະມາຊິກຊາວໜຸ່ມທີ່ມີສະຕິຕໍ່ການຈັດຕັ້ງດີ.
- ຍ້ອນເປັນຄົນມັກຫຼິ້ນກິນ ຈຶ່ງເຮັດໃຫ້ດວງນ້ອຍມັກຂາດສະຕິຕໍ່ການຈັດຕັ້ງເປັນປະຈຳ.
- ຢ່າຖິ້ມຂີ້ເຫຍື້ອຊະຊາຍ ຂໍໃຫ້ມີສະຕິນຳກັນເດີ.
- ຊາຍຜູ້ນັ້ນເປັນຄົນມີສະຕິບໍ່ສົມປະກອບ.
- ຂໍໃຫ້ຂັບຂີ່ຢ່າງມີສະຕິ ຄ່ອຍໄປຄ່ອຍມາ.

'ສະຕິ' ຍັງໝາຍເຖິງ “ຄວາມລະນຶກໄດ້” ເຊັ່ນ

- ພວກເຮົາຕ້ອງຕັ້ງສະຕິໃຫ້ດີຕໍ່ເຫດການຮ້າຍແຮງທີ່ເກີດຂຶ້ນ.
- ພະສົງສາມະເນນພ້ອມດ້ວຍພໍ່ຂາວແມ່ຂາວ ໄຫວ້ພະສູດມົນຈະເລີນສະມາທິ ພາວະນາ ກຳນົດສະຕິເພື່ອລະນຶກຮູ້ຕົວໃນລົມຫັນໃຈເຂົ້າອອກ.

'ປັນຍາ' ເປັນຄຳນາມຈາກເຄົ້າປາລີ Paññā ໝາຍເຖິງ “ຄວາມຮອບຮູ້, ຄວາມສາມາດຄິດຮູ້, ຄວາມສະຫຼາດ ເກີດຈາກການຮ່ຳຮຽນແລະຄຶດຫງຳ” ເຊັ່ນ

- ການຖືສິນ ແລະມີສະມາທິ ເຮັດໃຫ້ເກີດປັນຍາ.
- ຊຽງໝ້ຽງມີປັນຍາສຽບແຫຼມ ສາມາດຕົວະພະຍາລົງໜອງໄດ້.
- ຂ້ອຍມີປັນຍາສ່ຳຫາງອຶ່ງບໍ່ສາມາດຊ່ວຍຫຍັງເຈົ້າໄດ້ດອກ!
- ຢາກມີປັນຍາດີ ຕ້ອງສຶກສາຮ່ຳຮຽນແລະຄຶດຫງຳໃຫ້ຫຼາຍໆ.

ລາງເທື່ອທັງສອງຄຳນີ້ກໍໃຊ້ຊ້ອນກັນເປັນ 'ສະຕິປັນຍາ' ເຊິ່ງເຮັດໃຫ້ຄວາມໝາຍກວ້າງອອກຕື່ມ: "ປັນຍາຮອບຄອບ, ຄວາມສະຫຼາດປາດເປື່ອງຢ່າງຮອບຄອບ" ເຊັ່ນ

- ເພິ່ນເປັນຄົນມີສະຕິປັນຍາດີ ສາມາດແກ້ໄຂບັນຫາທຸກຢ່າງໄດ້.
- ມີຫົວຂໍ້ບົດຄວາມໜຶ່ງໃນໜັງສືພິມລາວພັດທະນາຂຽນວ່າ: ຢາກມີລັດແຫ່ງ 'ສະຕິປັນຍາ' ຕ້ອງສ້າງລັດນັບຖື 'ຄົນເກັ່ງ'.




# ວິທີເຮັດວຽກ

**ພາກທີ 5**
**ບັນຫາວິທີເຮັດວຽກ**

ໃນວຽກງານພະແນກຕ່າງໆຂອງພວກເຮົາ ຄືພະແນກການເມືອງ, ການເສດຖະກິດ, ການທະຫານ ແລະ ວັດທະນະທຳນັ້ນ, ກໍຄົງຈະມີຄົນຜູ້ທີ່ມີຄວາມສາມາດ ແລະ ສະຫຼາດສະຫຼຽວຄືນາຍຄູ ກ ນີ້ບໍ່ໜ້ອຍເລີຍ. ແຕ່ຍ້ອນວ່າວິທີການນຳຂອງພວກເຮົາຍັງບົກພ່ອງ, ລັດທິເຈົ້ານາຍຍັງໜັກ, ຈຶ່ງຍັງເຮັດໃຫ້ຄົນດີແນວນັ້ນຈົມຢູ່ພື້ນ, ບໍ່ໄດ້ຖືກເຊີດຊູຂຶ້ນມາມີຖານະອັນສົມກຽດຂອງເຂົາ. ຖ້າຢາກຫຼີກເວັ້ນການສູນເສຍຄວາມສາມາດຂອງຄົນແບບນັ້ນ, ພວກເຮົາຕ້ອງດັດແປງວິທີການນຳຂອງພວກເຮົາເສຍໃໝ່, ຄືຕ້ອງແນະນຳພະນັກງານໃນພະແນກຕ່າງໆໃຫ້ຈິງໃຈລາຍງານໃຫ້ຂັ້ນສູງຮູ້ວ່າມີຄວາມສາມາດພໍພຽງໃດຢູ່ບ່ອນໃດ ແລະ ສະເໜີໃຫ້ເລື່ອນຊັ້ນຜູ້ມີຄວາມສາມາດນັ້ນຂຶ້ນຢ່າງເໝາະສົມ.

2. ນະໂຍບາຍແມ່ນຖືກ ແຕ່ວິທີເຮັດຊ້ຳພັດຜິດ: ພວກເຮົາເຄີຍຮຽກຮ້ອງຊັກຊວນປະຊາຊົນໃຫ້ສ້າງບ້ານຂອງເຂົາເຈົ້າໃຫ້ເປັນບ້ານແບບຢ່າງ, ໃຫ້ທະຫານສ້າງຄ້າຍແບບຢ່າງ, ສ້າງກອງທະຫານແບບຢ່າງ ແລະ ສິ່ງອື່ນໆເປັນແບບຢ່າງຫຼາຍອັນ, ຄຳຂວັນທີ່ວາງອອກນັ້ນແມ່ນຖືກທີ່ສຸດ. ແຕ່ວ່າເຖິງດຽວນີ້ມີບາງບ່ອນຍັງເຮັດບໍ່ໄດ້, ບາງບ່ອນເຮັດໄດ້ເຄິ່ງໆກາງໆແລ້ວຊ້ຳປະປ່ອຍໃຫ້ເຢັນໄປ. ມັນເປັນຍ້ອນຫຍັງຈຶ່ງເປັນແນວນັ້ນ? ມັນເປັນຍ້ອນເຮົາລືມສິ່ງທີ່ງ່າຍໆ ແລະ ເຂົ້າໃຈງ່າຍໆທີ່ສຸດ, ສິ່ງນັ້ນແມ່ນທຸກສິ່ງ ທຸກຢ່າງ. ບໍ່ວ່າອັນໃດກໍລ້ວນແຕ່ແມ່ນຄົນເຮັດທັງນັ້ນ, ຕັ້ງແຕ່ຂອງນ້ອຍເຖິງຂອງໃຫຍ່, ແຕ່ຂອງຢູ່ມໍ່ເຖິງຂອງຢູ່ໄກກໍເປັນແນວນັ້ນໝົດ.

ອ່ານຕໍ່ສະບັບໜ້າ...



# ຂຽນຄໍາລາວໃຫ້ຖືກ

# ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ຮັກໄຄ່ | ຮັກໃຄ່ |
| ໄຈ້ແຍກ | ໃຈ້ແຍກ |
| ລຳໄສ້ | ລຳໃສ້ |
| ຂັ້ນໄດ | ຂັ້ນໃດ |
| ໄຕ້ໄຟ | ໃຕ້ໄຟ |
| ໝາໄນ | ໝາໃນ |
| ຂີ້ໄຫ້ | ຂີ້ໃຫ້ |
| ຜ້າສະໄບ | ຜ້າສະໃບ |
| ຄາງກະໄຕ | ຄາງກະໃຕ |

ລັດຖະສະພາຕ່າງປະເທດ

# ບັນດາປະເທດສະມາຊິກ EU ອະນຸມັດກົດໝາຍຄວບຄຸມ AI

*ວັນສຸກທີ 02 ກຸມພາທີ່ຜ່ານມາ ປະເທດສະມາຊິກຂອງສະຫະພາບເອີຣົບ ຫຼື EU ອະນຸມັດກົດລະບຽບທີ່ສຳຄັນ ກ່ຽວກັບການຄວບຄຸມປັນຍາປະດິດ ຫຼື ເອໄອ (AI) ພາຍຫຼັງການເຈລະຈາຂັ້ນສຸດທ້າຍທີ່ຫຍຸ້ງຍາກ ໃນປະເດັນກົດໝາຍຄວບຄຸມເອໄອ ຊຸດທຳອິດຂອງໂລກ.*




ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງບຣຸກແຊນ, ປະເທດແບນຊິກ ໃນວັນທີ 04 ກຸມພາ2024ວ່າ:ຝ່າຍບໍລິຫານ EU ໄດ້ສະເໜີກົດໝາຍເອໄອຄັ້ງທຳອິດເມື່ອປີ 2021 ແຕ່ໃຊ້ເວລາສ່ວນໃຫຍ່ໃນປີຜ່ານມາເລັ່ງຂະບວນການເພື່ອໃຫ້ໄດ້ຮັບການອະນຸມັດ.

ບັນດາປະເທດສະມາຊິກ ແລະ ຝ່າຍນິຕິບັນຍັດຂອງ EU ເຫັນດີກັບຮ່າງກົດລະບຽບຄວບຄຸມເອໄອ ເມື່ອເດືອນທັນວາ 2024 ເຖິງແມ່ນວ່າບາງປະເທດ ເຊັ່ນ ຝຣັ່ງ ແລະ ເຢຍລະມັນ ໄດ້ສະແດງຄວາມເປັນຫ່ວງຈົນເຮັດໃຫ້ເກີດຄວາມກັງວົນວ່າ ກົດໝາຍເອໄອຈະລົ້ມເຫຼວໃນຕອນສຸດທ້າຍ ແລະ ນຳໄປສູ່ການເຈລະຈາຮອບໃໝ່, ແຕ່ໃນທີ່ສຸດເອກອັກຄະລັດຖະທູດຂອງEU ໄດ້ລົງນາມອະນຸມັດກົດລະບຽບຄວບຄຸມເອໄອຢ່າງເອກະສັນ.

ທັງນີ້, ກົດໝາຍຂອງ EU ຈະຄວບຄຸມລະບົບເອໄອຕາມການປະເມີນຄວາມສ່ຽງຂອງຮູບແບບຊອບແວທີ່ກ່ຽວຂ້ອງ ໂດຍລະບຸວ່າ ຍິ່ງເອໄອມີຄວາມສ່ຽງຕໍ່ດ້ານຕ່າງໆຂອງແຕ່ລະບຸກຄົນ ເຊັ່ນ: ສິດທິ ຫຼື ສຸຂະພາບ ຢູ່ໃນລະດັບສູງເທົ່າໃດ ພາລະຜູກພັນຂອງລະບົບກໍຈະຍິ່ງຫຼາຍຂຶ້ນເຊັ່ນກັນ.

ລັດຖະສະພາເອີຣົບ ມີກຳນົດຈະລົງຄະແນນສຽງຮັບຮອງເອົາກົດໝາຍຄວບຄຸມເອໄອ ໃນເດືອນມີນາ ຫຼື ເມສານີ້ ເຊິ່ງຝ່າຍນິຕິບັນຍັດຂອງEU ກ່າວວ່າຮ່າງກົດໝາຍດັ່ງກ່າວຈະຜ່ານໂດຍບໍ່ມີບັນຫາໃດໆ ແລະ ຈະໄດ້ຮັບການອະນຸມັດຢ່າງເປັນທາງການໃນເດືອນພຶດສະພາທີ່ຈະເຖິງ.

ເຖິງແນວໃດກໍຕາມ, ກົດໝາຍສະບັບດັ່ງກ່າວຈະບໍ່ມີຜົນສັກສິດໃນທັນທີ ໂດຍກົດລະບຽບບາງຂໍ້ຈະມີຜົນບັງຄັບໃຊ້ພາຍໃນ 6 ເດືອນ, ໃນຂະນະທີ່ກົດລະບຽບອື່ນໆ ຈະມີຜົນບັງຄັບໃຊ້ໃນອີກສອງປີຕໍ່ມາ.

# ຜູ້ນຳເຊເນການ ສັ່ງເລື່ອນການເລືອກຕັ້ງ ທ່າມກາງການຂັດແຍ່ງ "ນິຕິບັນຍັດ-ຕຸລາການ"

*ປະທານາທິບໍດີເຊເນການ ໄດ້ສັ່ງໃຫ້ເລື່ອນການເລືອກຕັ້ງທົ່ວໄປ ເຊິ່ງເບື້ອງຕົ້ນຈະຕ້ອງຈັດຂຶ້ນໃນທ້າຍເດືອນນີ້, ຫຼັງຈາກສານສູງສຸດໄດ້ຕັດສິດຜູ້ສະໝັກຫຼາຍສິບຄົນ.*




ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງດາກາ, ປະເທດເຊເນການ ວ່າ: ທຳນຽບປະທານາທິບໍດີເຊເນການໄດ້ອອກຖະແຫຼງການເມື່ອວັນເສົາທີ 03 ກຸມພາ 2024 ວ່າ ປະທານາທິບໍດີ ມາກີ ຊານ (Macky Sall) ເລື່ອນກຳນົດການເລືອກຕັ້ງທົ່ວໄປທີ່ຈະຈັດຂຶ້ນໃນວັນທີ25ກຸມພານີ້ຢ່າງບໍ່ມີກຳນົດ ໂດຍບໍ່ໄດ້ລະບຸເຫດຜົນ, ແຕ່ກ່າວວ່າ ນັບແຕ່ນີ້ໄປ ຈະສ້າງຕັ້ງກົນໄກການເຈລະຈາເພື່ອກຳນົດເງື່ອນໄຂ ໄປສູ່ການເລືອກຕັ້ງທີ່ເສລີ, ໂປ່ງໃສ ແລະ ໄດ້ຂໍ້ສະຫຼຸບ ເພື່ອຄວາມສະຫງົບ ແລະ ການປະນີປະນອມຂອງປະເທດ.

ການເຄື່ອນໄຫວດັ່ງກ່າວຂອງຜູ້ນຳເຊເນການ ທີ່ດຳລົງຕຳແໜ່ງສອງສະໄໝຕິດຕໍ່ກັນ ແລະ ຢືນຢັນວ່າຈະບໍ່ລົງສະໝັກຮັບເລືອກຕັ້ງອີກ ເກີດຂຶ້ນພຽງສອງສາມຊົ່ວໂມງກ່ອນບັນດາພັກການເມືອງຈະເລີ່ມດຳເນີນການໂຄສະນາຫາສຽງຢ່າງເປັນທາງການ ທ່າມກາງການຂັດແຍ້ງ ແລະ ຂໍ້ໂຕ້ຖຽງກັນລະຫວ່າງສານລັດຖະທຳມະນູນ ກັບ ສະພາແຫ່ງຊາດ ຈາກການທີ່ສານໄດ້ຕັດສິດຜູ້ສະໝັກປະມານ 20 ຄົນ, ໃນນັ້ນ ສ່ວນໃຫຍ່ແມ່ນນັກການເມືອງຝ່າຍຄ້ານ ອ່ານາດຕະຖານ ແລະ ເງື່ອນໄຂບໍ່ສອດຄ່ອງກັບກົດໝາຍ.

ກົດໝາຍຂອງເຊເນການ ກຳນົດວ່າ ການເລືອກຕັ້ງຄັ້ງໃໝ່ຕ້ອງເກີດຂຶ້ນພາຍໃນໄລຍະເວລາ "ຢ່າງໜ້ອຍ 80 ວັນ" ໝາຍຄວາມວ່າການເລືອກຕັ້ງຄັ້ງໃໝ່ຈະເກີດຂຶ້ນໄວທີ່ສຸດແມ່ນເດືອນເມສານີ້.

ເຖິງແນວໃດກໍຕາມ, ຝ່າຍຄ້ານຂອງເຊເນການກ່າວປະນາມການຕັດສິນໃຈຂອງທ່ານ ຊານ ວ່າ ເປັນການກໍ່ລັດຖະປະຫານທາງລັດຖະທຳມະນູນ. ທາງດ້ານປະຊາຄົມເສດຖະກິດອາຟຣິກາຕາເວັນຕົກ (Economic Community of West African States-ECOWAS) ໄດ້ອອກຖະແຫຼງການສະແດງຄວາມເປັນຫ່ວງ ແລະ ຮຽກຮ້ອງໃຫ້ປະເທດເຊເນການ ກຳນົດວັນເລືອກຕັ້ງທົ່ວໄປຄັ້ງໃໝ່ໂດຍໄວເທົ່າທີ່ຈະໄວໄດ້.

# ສະພາແຫ່ງຊາດສິງກະໂປ ຜ່ານກົດໝາຍ ໃຫ້ອາຊະຍາກອນຄະດີຮ້າຍແຮງ "ຕິດຄຸກບໍ່ມີກຳນົດ"




*ສິງກະໂປ ເຊິ່ງເປັນໜຶ່ງໃນປະເທດທີ່ປອດໄພທີ່ສຸດໃນໂລກ ກະກຽມບັງຄັບໃຊ້ກົດໝາຍຈຳຄຸກຜູ້ກະທຳຄວາມຜິດທີ່ຮ້າຍແຮງຢ່າງບໍ່ມີກຳນົດ, ໂດຍສະເພາະຜູ້ທີ່ຖືກຕັດສິນລົງໂທດກ່ຽວກັບຄະດີຂົ່ມຂືນ ແລະ ຄາດຕະກຳ.*

ສະພາແຫ່ງຊາດສິງກະໂປ ໄດ້ຜ່ານມະຕິຕົກລົງເມື່ອວັນຈັນທີ 05 ກຸມພາຜ່ານມາ ຮັບຮອງເອົາກົດໝາຍ "ການລົງໂທດເພື່ອຍົກລະດັບຄວາມປອດໄພສາທາລະນະ" ກວມເອົາຜູ້ກະທຳຄວາມຜິດທາງອາຍາທີ່ຮ້າຍແຮງ ໂດຍສະເພາະແມ່ນກ່ຽວກັບການຄາດຕະກຳ, ການຂົ່ມຂືນ ແລະ ການລ່ວງລະເມີດທາງເພດເດັກນ້ອຍ ເພື່ອສ້າງຄວາມໝັ້ນໃຈໃຫ້ກັບທຸກຝ່າຍວ່າ ຜູ້ກະທຳຄວາມຜິດໃນຄະດີເຫຼົ່ານີ້ທີ່ພວມຮັບໂທດຢູ່ໃນຄຸກ ຈະບໍ່ກະທຳຄວາມຜິດຊ້ຳຄືນເມື່ອຖືກປ່ອຍຕົວອອກມາ.

ໂທດຈຳຄຸກຂັ້ນຕ່ຳສຳລັບຜູ້ກະທຳຄວາມຜິດໃນຄະດີອາຍາກໍລະນີດັ່ງກ່າວ ແມ່ນຢູ່ລະຫວ່າງ 5-20 ປີ ຂຶ້ນກັບການຕັດສິນຂອງສານ; ເຖິງແນວໃດກໍຕາມ, ຖ້າເຫັນວ່າຜູ້ກະທຳຄວາມຜິດມີຄວາມສ່ຽງສູງຈະກັບມາກໍ່ອາຊະຍາກຳທີ່ເປັນອັນຕະລາຍຕໍ່ສັງຄົມ ຕ້ອງສືບຕໍ່ຮັບໃຊ້ໂທດໃນຄຸກຕໍ່ໄປຢ່າງບໍ່ມີກຳນົດ ໂດຍຈະໄດ້ຮັບອິດສະຫຼະພາບກໍຕໍ່ເມື່ອຜູ້ຊ່ຽວຊານໄດ້ພິຈາລະນາແລະມີຄວາມເຫັນຕາມຫຼັກການວ່າ ນັກໂທດຄົນດັ່ງກ່າວຈະບໍ່ກັບຄືນມາກະທຳຄວາມຜິດທີ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມອີກ.

ປັດຈຸບັນ, ສິງກະໂປ ເປັນໜຶ່ງໃນປະເທດເຊິ່ງມີກົດໝາຍທີ່ເຄັ່ງຄັດທີ່ສຸດໃນໂລກ,ແມ່ນແຕ່ເດັກນ້ອຍທີ່ກະທຳຄວາມຜິດ ກໍອາດຈະຕ້ອງຖືກລົງໂທດດ້ວຍການຂ້ຽນຕີ; ຂະນະທີ່ອັດຕາເກີດອາຊະຍາກຳຂອງສິງກະໂປ ມີພຽງ 0,2 ຕໍ່ປະຊາກອນ 100.000ຄົນ, ຢູ່ໃນກຸ່ມປະເທດທີ່ຕ່ຳທີ່ສຸດໃນໂລກ.

**ແຫຼ່ງຂ່າວຈາກເວັບໄຊ: South China Morning Post**

# ຜູ້ນຳ ແອນ ຊານວາດໍ ຊະນະເລືອກຕັ້ງ ຮັກສາຕຳແໜ່ງສອງສະໄໝຕິດຕໍ່ກັນ

*ປະທານາທິບໍດີ ນາຢິບ ບູເຄເລ (Nayib Bukele) ຊະນະການເລືອກຕັ້ງຜູ້ນຳແອນ ຊານວາດໍ ເປັນສະໄໝທີສອງຕິດຕໍ່ກັນ ດ້ວຍຄະແນນສຽງສະໜັບສະໜູນຢ່າງລົ້ນເຫຼືອ.*




ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງຊານຊານວາດໍ, ປະເທດແອນ ຊານວາດໍ ເມື່ອວັນທີ 05 ກຸມພາ 2024 ວ່າ: ຜົນຢ່າງບໍ່ເປັນທາງການຂອງການເລືອກຕັ້ງປະທານາທິບໍດີ ແອນ ຊານວາດໍ ທີ່ໄດ້ຈັດຂຶ້ນໃນວັນອາທິດທີ 04 ກຸມພາຜ່ານມາ ປາກົດວ່າ ປະທານາທິບໍດີ ນາຢິບ ບູເຄເລ ຜູ້ນຳຄົນປັດຈຸບັນ ໄດ້ຮັບຄະແນນສຽງສະໜັບສະໜູນຢ່າງລົ້ນເຫຼືອຫຼາຍກວ່າ 85%, ຮັກສາຕຳແໜ່ງຜູ້ນຳເປັນສະໄໝທີ 2 ຕິດຕໍ່ກັນ.

ທ່ານ ບູເຄເລ ອາຍຸ 42 ປີ ໄດ້ຮັບການເລືອກຕັ້ງໃຫ້ດຳລົງຕຳແໜ່ງສະໄໝທຳອິດໃນເດືອນມິຖຸນາ 2019, ປະກາດເມື່ອປີ 2023 ວ່າຈະລົງສະໝັກຮັບເລືອກຕັ້ງເພື່ອຮັກສາຕຳແໜ່ງຜູ້ນຳຂອງປະເທດໃຫ້ໄດ້ເປັນສະໄໝທີສອງ ຫຼັງຈາກສານສູງສຸດຕັດສິນອະນຸຍາດໃຫ້ທ່ານລົງສະໝັກຮັບເລືອກຕັ້ງ ໄດ້ອີກຄັ້ງ ໂດຍຕ້ອງອອກຈາກຕຳແໜ່ງຢ່າງໜ້ອຍຫຼາຍກວ່າ 6 ເດືອນ ກ່ອນເຖິງວັນລົງຄະແນນສຽງ, ທ່ານ ບູເຄເລ ຈຶ່ງປະກາດລາອອກໃນທ້າຍປີຜ່ານມາ ແລະ ມີການແຕ່ງຕັ້ງຫົວໜ້າຄະນະເລຂາທິການປະທານາທິບໍດີ ໃຫ້ປະຕິບັດໜ້າທີ່ຮັກສາການ.

ເຖິງແນວໃດກໍຕາມ,ການຕັດສິນຂອງສານສູງສຸດໄດ້ເຮັດໃຫ້ເກີດການວິຈານຢ່າງກວ້າງຂວາງ ເນື່ອງຈາກລັດຖະທຳມະນູນສະບັບປັດຈຸບັນຂອງແອນ ຊານວາດໍ ໄດ້ກຳນົດຢ່າງຈະແຈ້ງວ່າປະທານາທິບໍດີແລະຮອງປະທານາທິບໍດີສາມາດດຳລົງຕຳແໜ່ງໄດ້ພຽງສະໄໝດຽວ, ເປັນເວລາສູງສຸດ 6 ປີ.

ທັງນີ້, ທ່ານ ບູເຄເລ ຍັງຊະນະຫົວໃຈຂອງປະຊາຊົນໃນປະເທດຢ່າງຫຼວງຫຼາຍ ໂດຍສະເພາະບັນດາຄົນຮຸ່ນໃໝ່ ຈາກການໃຊ້ມາດຕະການຢ່າງຈິງຈັງຕາມກົດໝາຍ ປາບປາມກຸ່ມອາຊະຍາກຳທີ່ມີການຈັດຕັ້ງຢູ່ແອນ ຊານວາດໍ.

# ຈັນຍາບັນ ແລະ ຄວາມຮັບຜິດຊອບ ທີ່ໄຊເຟີຕ້ອງມີ

❖ ວິເສດ ສະແຫວງສຶກສາ

ຕອນນີ້ມີຂ່າວຮ້າຍເກີດຂຶ້ນອ່າວຖີ່ ກ່ຽວກັບອຸບັດເຫດເພດໄພ ບໍ່ວ່າຈະເປັນຢູ່ລາວພວກເຮົາ ກໍຄືຢູ່ຕ່າງແດນ. ໃນບັນດາເຫດຮ້າຍທີ່ເກີດຂຶ້ນນັ້ນ, ອຸບັດເຫດຕາມທ້ອງຖະໜົນແມ່ນ ຄອງອັນດັບແຖວໜ້າ. ຂ່າວລົດຕົກເຫວຢູ່ພູເກົ້າຍອດ ບົນເສັ້ນທາງແຕ່ເມືອງ ກາສີ ຫາ ຫຼວງພະບາງ ນັ້ນ ໄດ້ປິດຊີວິດພະນັກງານອາວຸໂສບຳນານຄົນສຳຄັນຜູ້ໜຶ່ງພ້ອມດ້ວຍຄູ່ຊີວິດ. ນອກຈາກອຸບັດເຫດແລ້ວ ກໍຍັງມີເລື່ອງບໍ່ດີທີ່ເກີດຂຶ້ນກັບລົດທີ່ໃຫ້ບໍລິການຜູ້ໂດຍສານ ໂດຍສະເພາະແມ່ນກ່ຽວກັບການປະພຶດຂອງເຫຼົ່າໄຊເຟີ ທີ່ຂາດຈັນຍາບັນ, ສວຍໂອກາດເຮັດບໍ່ດີກັບລູກຄ້າ. ເນື້ອໃນຂອງບົດນີ້, ຜູ້ຂຽນໄດ້ສັງລວມເອົາບາງບັນຫາທີ່ເກີດຂຶ້ນກັບລະບົບການຂົນສົ່ງຢູ່ບາງປະເທດ ເພື່ອເບິ່ງໄວ້ເປັນຕົວຢ່າງເຊັ່ນ ຢູ່ປະເທດໄທ ເມື່ອບໍ່ພໍເທົ່າໃດປີຜ່ານມາ, ທາງການກ່ຽວຂ້ອງກໍໄດ້ອອກກົດລະບຽບເຫຼັກ ເພື່ອລົງໂທດໄຊເຟີລົດໂດຍສານ ປະເພດ ແທັກຊີ ທີ່ປະຕິເສດລູກຄ້າ. ໝາຍຄວາມວ່າລົດ ມີບ່ອນວ່າງຢູ່ ແຕ່ບໍ່ຍອມຮັບຜູ້ໂດຍສານ, ຢູ່ຫວຽດນາມ ນັ້ນ ຖ້າໄຊເຟີລົດແທັກຊີຄົນໃດຖືກກວດພົບວ່າມີທາດເຫຼົ້າຢູ່ໃນຮ່າງກາຍ ບໍ່ວ່າຈະໜ້ອຍ ຫຼື ຫຼາຍ ກໍແມ່ນຖືກປະຕິບັດວິໄນຢ່າງສຽບຂາດດ້ວຍການຍຶດໃບຂັບຂີ່ແລະລຶບລ້າງຖິ້ມໃນວິນາທີນັ້ນໂລດ. ເລື່ອງນີ້ອ້າງຕາມໜັງສືພິມ "ປະເທດລາວ" ສະບັບວັນທີ 19 ມິຖຸນາ 2019 ທີ່ບອກວ່າກອງປະຊຸມສະພາແຫ່ງຊາດຫວຽດນາມ ໄດ້ຮັບຮອງເອົາຮ່າງກົດໝາຍວ່າດ້ວຍການປ້ອງກັນ ແລະ ຄວບຄຸມໄພອັນຕະລາຍ ແລະ ຜົນກະທົບຈາກການບໍລິໂພກເຄື່ອງດື່ມປະເພດມຶນເມົາ ທີ່ມີຕໍ່ການໃຊ້ລົດໃຊ້ຖະໜົນ. ກົດໝາຍສະບັບດັ່ງກ່າວໄດ້ປະກາດໃຊ້ແຕ່ປີ 2020 ເປັນຕົ້ນມາ. ຢູ່ ກຳປູເຈຍ, ໜັງສືພິມ "ວຽງຈັນທາມ" ສະບັບ ປະຈຳວັນທີ 11 ສິງຫາ 2021 ໄດ້ເວົ້າກ່ຽວກັບບັນຫາ ການຄວບຄຸມລົດບັນທຸກນ້ຳໜັກເກີນຕາມມາດຕາ 20 ແລະ 60 ຂອງກົດໝາຍວ່າດ້ວຍ ການຂົນສົ່ງທາງບົກທີ່ໄດ້ + ກຳນົດໂທດປັບໃໝຢ່າງເຄັ່ງຄັດ ແລະ ເດັດຂາດຕໍ່ເຈົ້າຂອງ ກໍຄືໄຊເຟີລົດທີ່ມີຄວາມຜິດ. ຂ່າວບອກວ່າກົດໝາຍສະບັບດັ່ງກ່າວນັ້ນໄດ້ຮັບການເຜີຍແຜ່ຢ່າງກວ້າງຂວາງ ທັງແບບກວມລວມ ແລະ ແບບສະເພາະ ສຳລັບບັນດາເຈົ້າຂອງ ແລະ ໄຊເຟີທີ່ຮັບຜິດຊອບຂັບລົດບັນທຸກຂະໜາດໜັກ ຄື: ໄດ້ໂຄສະນາເຜີຍແຜ່ເປັນ 3 ຂັ້ນຕອນ: ກ່ອນປະກາດໃຊ້ກົດໝາຍ, ໃນເວລາປະຕິບັດກົດໝາຍ ແລະ ຫຼັງຈາກການປະຕິບັດກົດໝາຍມາໄດ້ໄລຍະໜຶ່ງ. ການລົງໂທດຜູ້ກະທຳຜິດ ຖານໄດ້ບັນທຸກເກີນນ້ຳໜັກຕາມມາດຕາ 60 ຂອງກົດໝາຍສະບັບນີ້ ນັ້ນຄື ລົດທີ່ບັນທຸກເກີນນ້ຳໜັກໃນອັດຕາ 20% ຈະຖືກປັບໃໝຕາມກົດໝາຍ, ສິນຄ້າ ຫຼື ວັດຖຸ ທີ່ບັນທຸກໃນລົດຄັນດັ່ງກ່າວ ຕ້ອງຖ່າຍເທອອກຈາກລົດ, ຈາກນັ້ນລົດເຈົ້າປັນຫາດັ່ງກ່າວກໍຈະຖືກກັກໄວ້ເປັນເວລາ 1 ປີເຕັມໆ.

ປີ 2024 ເປັນປີທ່ອງທ່ຽວລາວ, ດັ່ງນັ້ນ ການໃຫ້ບໍລິການຂົນສົ່ງ ແຂກບ້ານແຂກເມືອງ ທີ່ເຂົ້າມາທ່ອງທ່ຽວຈຶ່ງເປັນບັນຫາສຳຄັນຍິ່ງ ເພື່ອຄວາມປອດໄພຂອງແຂກ. ໄຊເຟີລົດໂດຍສານໂດຍສະເພາະແມ່ນປະເພດລົດແທັກຊີນັ້ນ ແມ່ນບຸກຄົນທີ່ມີໂອກາດໄດ້ສຳຜັດກັບແຂກຄົນກ່ອນພາກສ່ວນອື່ນ. ຖ້າການໃຫ້ບໍລິການເຕັມ ໄປດ້ວຍຈັນຍາບັນ ອາຊີບທີ່ດີ, ຮັບປະກັນຄວາມປອດໄພ ກໍຈະເປັນການປະກອບສ່ວນອັນສຳຄັນຕໍ່ຜົນສຳເລັດຂອງປີທ່ອງທ່ຽວລາວຂອງພວກເຮົາ.

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

ທະນາຄານພັດທະນາລາວ
LDB Bank




## ແກ້ແຄ້ນ

*# ບ່າວກະບື*

ທ້າວສີສົດ ໃຈຮ້າຍສຸດຂີດ ເມື່ອທອງປັນ, ຄົນເຮືອນໃກ້ໂທຕໍ່ວ່າຕໍ່ຂານເຂົາໃນເວລາສາມໂມງຕອນເຊົ້າວ່າ: "ຮ່າມັນ... ໝາເຈົ້າເຫົ່າດັງບໍ່ດັງ ຈົນຂ້ອຍນອນຊິບໍ່ໄດ້". ເວົ້າແລ້ວ ທອງປັນກໍປິດໂທລະສັບກ່ອນສີສົດຈະມີໂອກາດເວົ້າແຄກຄືນ ຍ້ອນຖືກລົບກວນຕອນເດິກດື່ນທ່ຽງຄືນຄືແນວນີ້.

ເພື່ອບໍ່ໃຫ້ເສຍແຕ້ມ, ເວລາສາມໂມງເຊົ້າຂອງມື້ຕໍ່ໄປ ສຽງໂທລະສັບຈາກສີສົດດັງຂຶ້ນຢູ່ເຮືອນທອງປັນ. ເຂົາບອກໄປວ່າ: "ເຮີຍ...ໂຕໂທຜິດແລກ – ເຮົາບໍ່ມີໝາລ້ຽງໂຕເນີ!".

## REBENGE

*# BAOKBU*

Sisoth was terribly annoyed when his neighbor Thongpun telephoned him at 3 am and complained: Damn it! your dog is harking so foudly that I can hardly sleep." Saying so, Thongpun hung up before Sisoth could protest against being disturbed in his sleep in the dead of the night.

Not to be outdone, the following morning at 3 am there was a call for Thongpun from Sisoth who informed him, "Hey, you dialled a wrongnumber - I don't have a dog!".







ຈິບວາຍແບບລາວ ຍົກແລ້ວໝົດຈອກ

● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ກົງທະນູຄຳ ພົພັດເສລີ
ທ່ານ ນາງ ສຸພາວັນ ຫອມສະນິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ